(ຮ່າງ)

# ບັນທຶກກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 15 ທີ່ ຫລວງພະບາງ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 23-25 ມີນາ 2009

1. ກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 15 ໄດ້ຈັດຂຶ້ນ ໃນວັນທີ 23-25 ມີນາ 2009 ທີ່ ແຂວງຫລວງພະບາງ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມຄຳເຊີນຂອງ ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
2. ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຫົວໜ້າຄະນະຜູ້ແທນ ແລະ ປະທານຮ່ວມຝ່າຍລາວ. ພະນະທ່ານ ກະສິດ ພີຣົມ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ຣາຊະອານາຈັກໄທ ເປັນຫົວໜ້າຄະນະຜູ້ແທນ ແລະ ປະທານຮ່ວມຝ່າຍໄທ. ລາຍຊື່ຄະນະຜູ້ແທນຂອງທັງສອງຝ່າຍ ໄດ້ຄັດຕິດໃນເອກະສານຫມາຍເລກ 1 ແລະ 2 ຕາມລຳດັບ.
3. ກອງປະຊຸມໄດ້ປຶກສາຫາລືແລກປ່ຽນຄວາມຄິດເຫັນ ແລະ ທົບທວນຜົນການຈັດຕັ້ງປະຕິບັດຕາມບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາ ແລະຜົນການປຶກສາຫາລື ລະຫວ່າງຜູ້ນຳລັດຖະບານຂອງທັງສອງຝ່າຍໃນໄລຍະທີ່ຜ່ານມາ ກ່ຽວກັບການຮ່ວມມືດ້ານຕ່າງໆ ທີ່ທັງສອງຝ່າຍໄດ້ປະຕິບັດຮ່ວມກັນໃນຮອບປີທີ່ຜ່ານມາ ທາງດ້ານການເມືອງ, ເສດຖະກິດ, ການຮ່ວມມືເພື່ອການພັດທະນາ ແລະ ດ້ານອື່ນໆ ແລະ ມີຄວາມເພິ່ງພໍໃຈທີ່ເຫັນວ່າການພົວພັນ ແລະ ການຮ່ວມມື ລະຫວ່າງສອງປະເທດດຳເນີນໄປດ້ວຍດີ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ ຊຶ່ງນຳເອົາຜົນປະໂຫຍດສູ່ປະຊາຊົນຂອງທັງສອງປະເທດຮ່ວມກັນ.
4. ກອງປະຊຸມສະແດງຄວາມຍິນດີຕໍ່ການແລກປ່ຽນການຢ້ຽມຢາມ ລະຫວ່າງການນຳຂັ້ນສູງລະຫວ່າງກັນ ເຊັ່ນ: ສົມເດັດພະເທບ ພະຣັດຣາຊະສຸດາ ສະຫຍາມບໍຣົມຣາຊະກຸມາຣີ ສະເດັດຢ້ຽມຢາມມະຫາວິທະຍາໄລຈຳປາສັກ ໃນວັນທີ 09 ພະຈິກ 2007, ນະຄອນຫລວງວຽງຈັນ ແລະ ຄຳມ່ວນ ແຕ່ວັນທີ 25-28 ພະຈິກ 2007 ແລະການສະເດັດເປັນປະທານກົດພິທີຮ່ວມ ໃນພິທີເປີດການນຳໃຊ້ເສັ້ນທາງລົດໄຟ ລາວ ໄທ ລະຫວ່າງ ນະຄອນຫລວງວຽງຈັນ-ຈັງຫວັດໜອງຄາຍ ແລະພິທີວາງສີລາລືກການກໍ່ສ້າງຂົວມິດຕະພາບ 3 ລະຫວ່າງ ຄຳມ່ວນ-ນະຄອນພະນົມ ແຕ່ວັນທີ 5-6 ມີນາ 2009 ຕາມລຳດັບ, ການຢ້ຽມຢາມ ຣາຊະອານາຈັກໄທຢ່າງເປັນທາງການຂອງ ພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແຕ່ວັນທີ 17 - 19 ທັນວາ 2007, ພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ ແລະລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຕ່ວັນທີ 16-17 ເມສາ 2007, ການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຂອງ ພະນະທ່ານ ສຸຣະຍຸດ ຈຸລານົນ,

ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ແຕ່ວັນທີ 14 ຕຸລາ 2006, ພະນະທ່ານ ສະໝັກ ສຸນທອນເວດ ແຕ່ວັນທີ 29 ກຸມພາ - 1 ມີນາ 2008 ແລະເຂົ້າຮ່ວມກອງປະຊຸມຄະນະກຳມະການຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 16 ແຕ່ວັນທີ 30 - 31 ມີນາ 2008, ພະນະທ່ານ ສົມຊາຍ ວົງສະຫວັດ, ນາຍົກລັດຖະມົນຕີ ແຫ່ງຣາຊະອານາຈັກໄທ ໃນວັນທີ 3 ພະຈິກ 2008 ແລະ ທ່ານ ອະພິສິດ ເວດຊາຊີວະ, ນາຍົກລັດຖະມົນຕີ ແຫ່ງຣາຊະອານາຈັກໄທ ໃນວັນທີ 23 ມັງກອນ 2009, ພະນະທ່ານ ນິດ ພິບູນ ສົງຄາມ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຕ່ວັນທີ 8-9 ມີນາ 2007, ພະນະທ່ານ ນົບພະດົນ ປັດທະມະ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຕ່ວັນທີ 21-22 ກຸມພາ 2008, ພະນະທ່ານ ສົມພົງ ອາມອນວິວັດ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໃນວັນທີ 10 ຕຸລາ 2008, ພະນະທ່ານ ເຕດ ບຸນນາກ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໃນວັນທີ 13 ສິງຫາ 2008 ແລະ ພະນະທ່ານ ກະສິດ ພີຣົມ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໃນວັນທີ 16 ມັງກອນ 2009 ລວມທັງການແລກປ່ຽນການຢ້ຽມຢາມຂອງຜູ້ແທນໃນລະດັບຕ່າງໆ ແລະ ກອງປະຊຸມຂອງກົນໄກການຮ່ວມມືທີ່ທັງສອງຝ່າຍໄດ້ຈັດຕັ້ງຂຶ້ນຢ່າງເປັນປົກກະຕິ, ຊຶ່ງມີສ່ວນສຳຄັນໃນການເສີມຂະຫຍາຍການພົວພັນການຮ່ວມມື ແລະ ຄວາມເຂົ້າໃຈອັນດີ ລະຫວ່າງ ປະຊາຊົນຂອງທັງສອງປະເທດ.

5. ກອງປະຊຸມມີຄວາມຍິນດີ ທີ່ກະຊວງການຕ່າງປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງການຕ່າງປະເທດ ແຫ່ງ ຣາຊະອານາຈັກໄທ ເຮັດວຽກຮ່ວມກັນຢ່າງໃກ້ຊິດ ໃນການສະໜັບສະໜູນ ແລະ ຊຸກຍູ້ການດຳເນີນງານຂອງກົນໄກການຮ່ວມມືລາວ-ໄທ ໃນດ້ານຕ່າງໆ ຕາມນະໂຍບາຍຂອງລັດຖະບານຂອງທັງສອງປະເທດ ລວມທັງປົກການແລກປ່ຽນການຢ້ຽມຢາມ, ການຮ່ວມມືທາງດ້ານວິຊາການ ແລະ ໄດ້ດຳເນີນໂຄງການ "ໂຮງຮຽນເພື່ອນມິດ", ລະໜັບສະໜູນງົບປະມານກໍ່ສ້າງໂຮງຮຽນ ຢູ່ໃນແຂວງຊາຍແດນລາວ-ໄທຢ່າງຕໍ່ເນື່ອງ ຕັ້ງແຕ່ປີ 2006, ສຳລັບໂຄງການໃນປີ 2009 ຝ່າຍໄທໄດ້ສະໜັບສະໜູນງົບປະມານຈຳນວນ 2 ລ້ານບາດ ໃນການກໍ່ສ້າງໂຮງຮຽນມັດທະຍົມສົມບູນບ້ານນາຊາ, ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ, ນອກຈາກນັ້ນ ກອງປະຊຸມໄດ້ເຫັນດີ ໃຫ້ທັງສອງຝ່າຍປຶກສາຫາລື ກະກຽມກິດຈະກຳຕ່າງໆໃນໂອກາດຄົບຮອບ 60 ປີ ຂອງການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ລາວ-ໄທ ໃນເດືອນ ທັນວາ 2010.

6. ກອງປະຊຸມຢືນຢັນເຈດຕະນາລົມຂອງລັດຖະບານຂອງທັງສອງປະເທດ ທີ່ຈະຮັດແໜ້ນການຮ່ວມມື ທັງໃນຂອບທະວິພາຄີ ແລະ ພະຫຸພາຄີໃຫ້ແໜ້ນແຟ້ນຍິ່ງຂຶ້ນ ເພື່ອນຳຄວາມຈະເລີນຮຸ່ງເຮືອງມາສູ່ປະຊາຊົນລາວ ແລະ ໄທ ກໍ່ຄືເພື່ອສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ.

7. ກອງປະຊຸມໄດ້ປຶກສາຫາລືປະເດັນຕ່າງໆຕາມລະບຽບວາລະກອງປະຊຸມເດັ່ງເອາະສານຄັດຕິດໝາຍເລກ 5 ສະຫລຸບໄດ້ດັ່ງນີ້ :

## ການຮ່ວມມືດ້ານການເມືອງ ແລະ ຄວາມໝັ້ນຄົງ

### ການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມບໍລິເວນຊາຍແດນ.

8. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນສຳເລັດກອງປະຊຸມຄະນະກຳມະການຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປລາວ-ໄທ ຄັ້ງທີ 16 ແລະການຮ່ວມມືຂອງຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ທັງໃນລະດັບສູນກາງ ແລະລະດັບທ້ອງຖິ່ນໄດ້ເປີກສາຫາລື ແລະປະສານງານຮ່ວມກັນຢ່າງເປັນປົກກະຕິ, ຊຶ່ງໄດ້ເຮັດໃຫ້ບໍລິເວນຊາຍແດນສ່ວນໃຫຍ່ມີຄວາມສະຫງົບດີຂຶ້ນ ແລະ ສະໜັບສະໜູນໃຫ້ຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນລະດັບແຂວງ-ຈັງຫວັດ ທີ່ມີຊາຍແດນຕິດຈອດກັນໄດ້ພົບປະເປີກສາຫາລືກັນຢ່າງນ້ອຍປີລະ 1 ຄັ້ງ ໂດຍຜັດປ່ຽນກັນເປັນເຈົ້າພາບ ເພື່ອສົ່ງເສີມຄວາມເຂົ້າໃຈກັນດີ ແລະ ການຮ່ວມມືລະຫວ່າງແຂວງ-ຈັງຫວັດ.

9. ກອງປະຊຸມສະໜັບສະໜູນໃຫ້ຄະນະອະນຸກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ແລະໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍ ສືບຕໍ່ເລັ່ງລັດປັບປຸງຂໍ້ຕົກລົງວ່າດ້ວຍການຮ່ວມມືດ້ານຄວາມໝັ້ນຄົງບໍລິເວນຊາຍແດນ ລາວ- ໄທ ໃຫ້ແທດເໝາະກັບສະພາບເງື່ອນໄຂປະຈຸບັນ ທີ່ສອງຝ່າຍເຫັນດີໃຫ້ມີຜົນບັງຄັບໃຊ້ຕໍ່ໄປອີກ 5 ປີ ໃຫ້ເປັນຮູບປະທຳໂດຍໄວ ເພື່ອເຮັດໃຫ້ຊາຍແດນຂອງທັງສອງປະເທດ ມີຄວາມສະຫງົບ ແລະໝັ້ນຄົງຕະຫລອດໄປ.

10. ກອງປະຊຸມສະແດງຄວາມຍິນດີ ທີ່ກອງທັບຂອງທັງສອງປະເທດ ໄດ້ມີການຮ່ວມມື ແລະແລກປ່ຽນການຢ້ຽມຢາມເຊິ່ງກັນແລະກັນຢ່າງສະໝ່ຳສະເໝີ ລະຫວ່າງ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ເສນາທິການ ກອງທັບປະຊາຊົນລາວ ແລະ ຫົວໜ້າກົມໃຫຍ່ຕຳຫລວດ ກະຊວງປ້ອງກັນຄວາມສະຫງົບແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບ ລັດຖະມົນຕີວ່າການກະຊວງກະລາໂຫມ, ຜູ້ບັນຊາການທະຫານສູງສຸດ, ຜູ້ບັນຊາການເຫລົ່າທັບ, ຜູ້ບັນຊາການຕຳຫລວດແຫ່ງຊາດ, ແມ່ທັບພາກທີ 2 ແລະ ແມ່ທັບພາກທີ 3 ແຫ່ງຣາຊະອານາຈັກໄທ ແລະ ໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງສອງຝ່າຍສືບຕໍ່ຈັດຕັ້ງປະຕິບັດບັນດາບົດບັນທຶກກອງປະຊຸມຕ່າງໆ ທີ່ໄດ້ຕົກລົງກັນເຊັ່ນ: ບົດບັນທຶກກອງປະຊຸມ ຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ- ໄທ ຄັ້ງທີ 16, ບົດບັນທຶກກອງປະຊຸມຄະນະອະນຸກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ- ໄທ ຄັ້ງທີ 1/2009 (40) ແລະບົດບັນທຶກກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ- ໄທ ລະດັບແຂວງ ແລະຈັງຫວັດໃຫ້ສຳເລັດ.

11. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນຂອງກອງປະຊຸມຄະນະກຳມະການຮ່ວມລາວ-ໄທ ວ່າດ້ວຍການຮ່ວມມືດ້ານວຽກຕຳຫລວດ ຄັ້ງທີ 1 ໃນວັນທີ 19-21 ກັນຍາ 2007 ທີ່ຈັງຫວັດຂອນແກ່ນ ຣາຊະອານາຈັກໄທ ແລະສະໜັບສະໜູນການຮ່ວມມື ລະຫວ່າງໜ່ວຍງານຕຳຫລວດ ລາວ-ໄທ ໃນການແລກປ່ຽນການຢ້ຽມຢາມ ແລະ ຝຶກອົບຮົມໃນດ້ານຕ່າງໆຕາມຄວາມເໝາະສົມ. ສຳລັບກອງ

ປະຊຸມຄະນະກຳມະການຮ່ວມລາວ-ໄທ ວ່າດ້ວຍການຮ່ວມມືດ້ານວຽກຕຳຫລວດ ຄັ້ງທີ 2 ຝ່າຍລາວຈະເປັນເຈົ້າພາບ ສ່ວນວັນເວລາຈະແຈ້ງໃຫ້ຝ່າຍໄທຊາບຕາມພາຍຫລັງ.

12. ກອງປະຊຸມເຫັນດີໃຫ້ປະຕິບັດຕາມຂໍ້ 7.10 ຂອງບັນທຶກກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 16 ໂດຍຝ່າຍໄທຈະສະກັດກັ້ນ ແລະ ປາບປາມການເຄື່ອນໄຫວຂອງຄົນບໍ່ຫວັງດີຕໍ່ການພົວພັນ ລາວ-ໄທ ຕາມພື້ນທີ່ຂອງຕົນໃຫ້ຫມົດສິ້ນໄປ ແລະ ຝ່າຍລາວຈະຮ່ວມມືສະກັດກັ້ນ ແລະ ປາບປາມໃນບໍລິເວນຊາຍແດນຂອງຕົນຢ່າງເດັດຂາດ.

13. ກອງປະຊຸມສະແດງຄວາມຍິນດີຕໍ່ການດຳເນີນການພາຍໃຕ້ຂອບຂອງຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ໃນການສົ່ງກັບຊາວມົ້ງລາວ ທີ່ເຂົ້າເມືອງຜິດກົດໝາຍຢູ່ປະເທດໄທ ໃຫ້ແກ່ຝ່າຍລາວແຕ່ປີ 2007 ມາເຖິງປັດຈຸບັນມີ 12 ຄັ້ງ ຈຳນວນ 2,057 ຄົນ ແລະ ຝ່າຍໄທຈະສົ່ງຊາວມົ້ງລາວກັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 26 ມີນາ 2009 ຈຳນວນ 350 ຄົນ ຊຶ່ງລັດຖະບານລາວ ໄດ້ອຳນວຍຄວາມສະດວກ ແລະ ຈັດສັນສະຖານທີ່ພັກເຊົາໃຫ້ຊາວມົ້ງລາວເປັນຢ່າງດີ ໂດຍທັງສອງຝ່າຍເຫັນດີມອບໝາຍ ໃຫ້ສອງກອງທັບລາວ ແລະ ໄທ ແລະພາກສ່ວນກ່ຽວຂ້ອງຂອງສອງ ຝ່າຍສືບຕໍ່ຈັດສົ່ງມົ້ງເຂົ້າເມືອງຜິດກົດໝາຍທີ່ຢູ່ພາຍໃຕ້ຂອບ ການຮ່ວມມືຂ້າງເທິງທີ່ຍັງເຫລືອ ຢູ່ໃນປະເທດໄທໃຫ້ແກ່ຝ່າຍລາວໃຫ້ສຳເລັດພາຍໃນປີ 2009 ໂດຍຈະຮ່ວມມືກັນແກ້ໄຂບັນຫາ ພາຍໃຕ້ກົນໄກທະວິພາຄີທີ່ມີຢູ່.

14. ຝ່າຍລາວສະແດງຄວາມຂອບໃຈຕໍ່ຝ່າຍໄທທີ່ໄດ້ມອບເງິນຈຳນວນ 1,500,000 ບາດ ໃຫ້ແກ່ຝ່າຍລາວເພື່ອນຳໄປກໍ່ສ້າງສຸກສາລາໃຫ້ແກ່ຊາວມົ້ງລາວທີ່ໄດ້ຖືກສົ່ງກັບຄືນ ສປປ ລາວ ແລະຝ່າຍໄທພ້ອມຈະພິຈາລະນາໃຫ້ການສະໜັບສະໜູນດ້ານການເງິນ ແລະວັດຖຸອຸປະກອນຕ່າງໆເພີ່ມເຕີມໃຫ້ແກ່ຝ່າຍລາວ ເພື່ອນຳໃຊ້ເຂົ້າໃນການພັດທະນາ ແລະຍົກລະດັບຊີວິດການເປັນຢູ່ຂອງຊາວມົ້ງລາວດັ່ງກ່າວ.

15. ກອງປະຊຸມເຫັນດີໃຫ້ປະຕິບັດຕາມ ບັນທຶກກອງປະຊຸມຄະນະກຳມະການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ ຄັ້ງທີ 16, ທັງນີ້ ຝ່າຍໄທໄດ້ແຈ້ງໃຫ້ກອງປະຊຸມຊາບວ່າຫນ່ວຍເຮືອຮັກສາຄວາມສະຫງົບຮຽບຮ້ອຍຕາມແມ່ນ້ຳຂອງ (ນຮຂ) ໄດ້ເພີ່ມຄວາມລະມັດລະວັງໃນການປະຕິບັດໜ້າທີ່ຢ່າງເຂັ້ມງວດຢູ່ແລ້ວ ແລະຈະເພີ່ມຄວາມລະມັດລະວັງ ໃນການປະຕິບັດໜ້າທີ່ໃຫ້ດີຢ່າງຕໍ່ເນື່ອງ.

16. ກອງປະຊຸມຮັບຊາບ ແລະສະໜັບສະໜູນການດຳເນີນໂຄງການ ຝຶກອົບຮົມດ້ານການປ້ອງກັນ ແລະ ປາບປາມການຟອກເງິນ ໂດຍສຳນັກງານຄະນະກຳມະການປ້ອງກັນແລະປາບປາມການຟອກເງິນຂອງໄທ ໄດ້ໃຫ້ຄວາມຮ່ວມມືຈັດຝຶກອົບຮົມໃຫ້ແກ່ບຸກຄະລາກອນລາວ ຄັ້ງທີ 3 ໃນວັນທີ 19-20 ກຸມພາ 2009 ທີ່ ນະຄອນຫລວງວຽງຈັນ.

ການສຳຫລວດແລະປັກຫລັກໝາຍຊາຍແດນຮ່ວມ ລາວ-ໄທ

17. ກອງປະຊຸມໄດ້ສະແດງຄວາມຍິນ ຕໍ່ຄວາມຄືບໜ້າຂອງການສຳຫລວດ ແລະປັກຫລັກໝາຍຊາຍແດນ ຢູ່ພູມີປະເທດຕົວຈິງມາເຖິງປະຈຸບັນສາມາດກໍ່ສ້າງຫລັກໝາຍຊາຍແດນໄດ້ ຈຳນວນ 204 ໂດຍມີການຮັບຮອງເອົາໃນລະບຽບຄະນະກຳມາທິການຊາຍແດນຮ່ວມ ລາວ-ໄທ ແລ້ວຈຳນວນ 190 ຫລັກ ໃນຄວາມຍາວຂອງເສັ້ນຊາຍແດນປະມານ 677 ກິໂລແມັດ. ?

18. [ກອງປະຊຸມເຫັນດີໃຫ້ຈັດກອງປະຊຸມ ຄະນະກຳມາທິການຊາຍແດນຮ່ວມລາວ-ໄທ ຄັ້ງທີ 9 ໃນ 2009 ເພື່ອເລັ່ງລັດດຳເນີນການສຳຫລວດ ແລະປັກຫລັກໝາຍຊາຍພື້ນທີ່ຮ່ວມລະຫວ່າງລາວ-ໄທ ໂດຍຫວັງປັກໃຫ້ສຳເລັດໃນປີ 2009 ແລະ ທາງນ້ຳໃນປີ 2010 ຫລັງຈາກລັດຖະບານໄທເຫັນດີໃນຂອບການເຈລະຈາການສຳຫລວດ ແລະປັກຫລັກໝາຍຊາຍແດນ ລາວ-ໄທ ຕະຫລອດຊາຍແດນ ໃນຂອບຂອງຄະນະກຳມາທິການຊາຍແດນຮ່ວມລາວ-ໄທ ແລະກົນໄກອື່ນໆຂອງໄທໃນກອບນີ້ແລ້ວ.]

ການຮ່ວມມືດ້ານການປ້ອງກັນແລະປາບປາມຢາເສບຕິດ

19. ກອງປະຊຸມສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງກອງປະຊຸມທະວິພາຄີ ວ່າດ້ວຍການຮ່ວມມືດ້ານການປ້ອງກັນ ແລະປາບປາມຢາເສບຕິດຄັ້ງທີ 11 ແຕ່ວັນທີ 9-10 ກໍລະກົດ 2008 ທີ່ ພັດທະຍາ, ຈັງຫວັດຊົນບູຣີ ແລະສະແດງຄວາມຊົມຊື່ນຍິນດີທີ່ເຫັນວ່າຄະນະກຳມະການແຫ່ງຊາດລາວ ເພື່ອກວດກາ ແລະຄວບຄຸມຢາເສບຕິດ ແລະ ສຳນັກງານຄະນະກຳມະການປ້ອງກັນແລະປາບປາມຢາເສບຕິດຂອງໄທ ໄດ້ມີການຮ່ວມມື, ປະສານງານກັນຢ່າງໃກ້ຊິດ ແລະໄດ້ຮັບຜົນສຳເລັດໃນການສະກັດກັ້ນການລັກລອບຄ້າຂາຍ ແລະການລຳລຽງຂົນສົ່ງຢາເສບຕິດຕາມບໍລິເວນຊາຍແດນ, ຊຶ່ງໄດ້ນຳໄປສູ່ການຈັບກຸມຄຸມຂັງພວກຄ້າຂາຍຢາເສບຕິດທີ່ສຳຄັນຈຳນວນໜຶ່ງ. ພ້ອມກັນນັ້ນ, ຝ່າຍໄທກຽມພ້ອມທີ່ຈະໃຫ້ການຮ່ວມມືດ້ານວິຊາການ, ແລກປ່ຽນບົດຮຽນ ແລະ ການພັດທະນາກົດໝາຍຢາເສບຕິດ ໃຫ້ແກ່ຝ່າຍລາວໃນໄລຍະຕໍ່ໄປ.

20. ກອງປະຊຸມຮັບຊາບ ກ່ຽວກັບການພັດທະນາສູນບຳບັດ ແລະ ຟື້ນຟູຜູ້ຕິດຢາເສບຕິດ ທີ່ແຂວງຈຳປາສັກ ທີ່ໄດ້ມີການມອບ-ຮັບກັນມາແຕ່ປີ 2005 ສາມາດປະຕິບັດບັນດາກິດຈະກຳທີ່ຍັງຄົງຄ້າງສຳເລັດໃນປີ 2008.

21. ກອງປະຊຸມເຫັນດີໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍປັບປຸງຂອດການປະສານງານ, ການສະໜອງເຄື່ອງມືອຸປະກອນ, ການວາງແຜນການຮ່ວມລາດຕະເວນຮ່ວມກັນຕາມລຳແມ່ນ້ຳຂອງ ໃຫ້ມີປະສິດທິຜົນສູງຂຶ້ນ ແລະຊຸກຍູ້ໃຫ້ຈັດຕັ້ງໜ່ວຍງານປະສານງານຊາຍແດນ (Border Lialson Office - BLO) ຈາກ 3 ຈຸດ ເພີ່ມຕື່ມອີກ 6 ຈຸດ ຕາມຄວາມເຫມາະສົມ ທີ່ໄດ້ກຳນົດໄວ້ໃນບົດບັນທຶກກອງປະຊຸມທະວິພາຄີ ວ່າດ້ວຍການຮ່ວມມືດ້ານການປາບປາມຢາເສບຕິດ ຄັ້ງທີ 11 ເພື່ອສະກັດກັ້ນການລັກລອບຄ້າຂາຍຢາເສບຕິດຕາມລຳແມ່ນ້ຳຂອງ.

## ກອງປະຊຸມລະຫວ່າງຄະນະເຈົ້າແຂວງ ແລະ ຜູ້ວ່າລາຊະການຈັງຫວັດຊາຍແດນ

22. ກອງປະຊຸມສະແດງຄວາມຍິນດີ ທີ່ຝ່າຍລາວຈະເປັນເຈົ້າພາບ ຈັດກອງປະຊຸມຄະນະເຈົ້າແຂວງ ແລະ ຜູ້ວ່າລາຊະການຈັງຫວັດຊາຍແດນລາວ-ໄທ ຄັ້ງທີ 8 ແຕ່ວັນທີ 22-24 ເມສາ 2009 ທີ່ ແຂວງຈຳປາສັກ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ການຮ່ວມມືດ້ານກົງສຸນ, ກໍລະນີບຸກຄົນຂອງແຕ່ລະຝ່າຍຖືກຈັບກຸມຄຸມຂັງ

23. ກອງປະຊຸມເຫັນດີໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງທັງສອງຝ່າຍຍຶດໝັ້ນຫລັກປະຕິບັດ ໃນການຈັບກຸມຄຸມຂັງບຸກຄົນຂອງແຕ່ລະຝ່າຍຕາມຫລັກການທີ່ເຫັນດີຮ່ວມກັນ ໃນກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 13 ຢ່າງເຂັ້ມງວດ ພ້ອມທັງຮັບປະກັນຄວາມປອດໄພໃຫ້ແກ່ຜູ້ຕ້ອງຫາ ແລະ ນັກໂທດ ທັງອຳນວຍຄວາມສະດວກໃຫ້ຝ່າຍເຈົ້າໜ້າທີ່ຈາກສະຖານທູດ, ສະຖານກົງສຸນໃຫຍ່ ແລະ ຍາດພີ່ນ້ອງຂອງແຕ່ລະຝ່າຍເຂົ້າຢ້ຽມຢາມ.

24. ກອງປະຊຸມສະແດງຄວາມຍິນດີ ທີ່ທັງສອງຝ່າຍໄດ້ແລກປ່ຽນສານປະກາດໃຫ້ສັດຕະຍາບັນ ແກ່ສົນທິສັນຍາ ວ່າດ້ວຍການໂອນຕົວຜູ້ຖືກຕັດສິນລົງໂທດ ແລະ ການຮ່ວມມືໃນການປະຕິບັດຄຳຕັດສິນຄະດີອາຍາ ໃນວັນທີ 19 ທັນວາ 2007, ແຕ່ຍັງບໍ່ສາມາດທີ່ຈະປະຕິບັດໄດ້ ເນື່ອງຈາກວ່າຝ່າຍລາວກຳລັງພິຈາລະນາອອກກົດໝາຍເພື່ອຮັບໃຊ້ໃນການດຳເນີນການດ້ານຕ່າງໆ. ພ້ອມກັນນີ້ ຝ່າຍໄທໄດ້ມອບບັນຊີລາຍຊື່ຜູ້ຖືກຈັບກຸມຄຸມຂັງສັນຊາດລາວໃນໄທ ໃຫ້ແກ່ຝ່າຍລາວ ແລະ ທັງສອງຝ່າຍຈະສືບຕໍ່ປັບປຸງບັນຊີລາຍຊື່ຜູ້ຖືກຈັບກຸມຄຸມຂັງແລະແລກປ່ຽນໃຫ້ກັນຊາບປີລະ 1 ຄັ້ງ.

## ການຮ່ວມມືໃນການເປີດແລະຍົກລະດັບດ່ານຜ່ານແດນ ແລະ ອຳນວຍຄວາມສະດວກໃນການເຂົ້າ-ອອກເມືອງ ແລະ ການສັນຈອນຕາມບໍລິເວນຊາຍແດນ ລາວ-ໄທ

25. ເພື່ອຂະຫຍາຍຜົນຂອງສັນຍາວ່າດ້ວຍການເດີນທາງຜ່ານແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ລາຊະອານາຈັກໄທ ສະບັບລົງວັນທີ 20 ມິຖຸນາ 1997 ແລະ ເພື່ອໃຫ້ປະຊາຊົນຂອງທັງສອງປະເທດ ສາມາດໄປມາຫາສູ່ກັນໄດ້ສະດວກ ກອງປະຊຸມເຫັນດີໃຫ້ແຂວງແລະຈັງຫວັດຕາມຊາຍແດນລາວ-ໄທ ຄົ້ນຄວ້າເພີ່ມຈຸດດ່ານຜ່ານແດນລະຫວ່າງກັນ ແລະນຳສະເໜີໃຫ້ຂັ້ນເທິງແຕ່ລະຝ່າຍພິຈາລະນາ.

26. ກອງປະຊຸມສະແດງຄວາມຍິນດີ ຕໍ່ການຍົກລະດັບດ່ານເມືອງເງິນ, ແຂວງໄຊຍະບູລີ ຂຶ້ນເປັນດ່ານສາກົນ ໃນວັນທີ 21 ທັນວາ 2008 ເພື່ອອຳນວຍຄວາມສະດວກ, ສົ່ງເສີມການທ່ອງທ່ຽວ, ການຄ້າ ແລະການລົງທຶນ. ສຳລັບການຍົກລະດັບດ່ານທ້ອງຖິ່ນ ບ້ານປາງມອນ, ເມືອງຄອບ, ແຂວງໄຊຍະບູລີ ກົງກັນຂ້າມຈຸດຜ່ານແດນ ບ້ານຮວກ, ອຳເພີພູຊາງ, ຈັງຫວັດພະເຢົາ; ດ່ານທ້ອງຖິ່ນພູດູ່ ບ້ານຜາແກ້ວ, ເມືອງປາກລາຍ, ແຂວງໄຊຍະບູລີ ກົງກັນຂ້າມຈຸດຜ່ານແດນ ບ້ານມ່ວງເຈັດຕົ້ນ, ອຳເພີ ບ້ານໂຄກ, ຈັງຫວັດອຸຕຣະດິດ ແລະດ່ານບ້ານວັງ, ເມືອງຊະນະຄາມ, ແຂວງວຽງຈັນ ກົງກັນຂ້າມກັບດ່ານ ບ້ານຄົກໄຜ່, ອຳ

ເພີ່ປາກຊັນ, ຈັງຫວັດເລີຍ ເປັນດ່ານສາກົນນັ້ນ ເຊິ່ງຝ່າຍລາວເຫັນດີໃນດ້ານຫລັກການ ໂດຍໃຫ້ພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍປຶກສາຫາລືລາຍລະອຽດຮ່ວມກັນ ແລະລາຍງານຂັ້ນເທິງຂອງຕົນພິຈາລະນາຕໍ່ໄປ.

27. ກອງປະຊຸມຮັບຊາບ ການຂະຫຍາຍເວລາເປີດ ດ່ານວັງເຕົ່າ-ຊ່ອງເມັກ ຈາກເວລາ 06:00-18:00 ໂມງ ເປັນ 06:00-20:00 ໂມງ ເຊິ່ງຝ່າຍໄທໄດ້ເລີ່ມປະຕິບັດໃນເດືອນ ກຸມພາ 2006 ແລະຝ່າຍລາວໄດ້ເລີ່ມປະຕິບັດໃນເດືອນ ມີນາ 2007 ເພື່ອອຳນວຍຄວາມສະດວກດ້ານການສັນຈອນຂອງປະຊາຊົນ ແລະສະໜັບສະໜູນການເປີດສາຍທາງລົດໂດຍສານລາວ-ໄທ ປາກເຊ-ອຸບົນຣາຊະທານີ.

<u>ການຮ່ວມມືໃນການຄຸ້ມຄອງ ແລະປ້ອງກັນຕາຝັ່ງເຈື່ອນຕາມແມ່ນ້ຳຂອງ ແລະນ້ຳເຫືອງ</u>

28. ກອງປະຊຸມສະແດງຄວາມຍິນດີຕໍ່ຜົນຂອງກອງປະຊຸມຄະນະກຳມະການຮ່ວມ ລາວ-ໄທ ເພື່ອຄຸ້ມຄອງກິດຈະການຕ່າງໆຕາມແມ່ນ້ຳຂອງ ແລະນ້ຳເຫືອງ ຄັ້ງທີ 3 ໃນວັນທີ 23-25 ມິຖຸນາ 2008, ຊຶ່ງໄດ້ຮັບຮອງເອົາຂໍ້ກຳນົດມາດຕະຖານເຕັກນິກການກໍ່ສ້າງ ກິດຈະການປ້ອງກັນຕະຝັ່ງເຈື່ອນຕາມແມ່ນ້ຳຂອງ ແລະນ້ຳເຫືອງ ແລະຂໍ້ກຳນົດທາງດ້ານເຕັກນິກການຂຸດຄົ້ນແຮ່, ຊາຍ ຕາມແມ່ນ້ຳຂອງ ແລະນ້ຳເຫືອງ, ກວດກາພື້ນທີ່, ຈັດຝຶກອົບຮົມໃຫ້ເຈົ້າໜ້າທີ່ ແລະປະຊາຊົນ ແລະການແລກປ່ຽນຂໍ້ມູນຂ່າວສານລະຫວ່າງກັນ ໂດຍມອບໃຫ້ຄະນະອະນຸກຳມະການເຕັກນິກຮ່ວມ ຮ່ວມກັນປຶກສາຫາລືເພື່ອດຳເນີນການກວດກາ ແລະແກ້ໄຂການດູດແຮ່ຊາຍທີ່ມີຜົນກະທົບຕໍ່ສະພາບແວດລ້ອມຕາມແມ່ນ້ຳຂອງ ແລະນ້ຳເຫືອງໃຫ້ເປັນຮູບປະທຳໂດຍໄວ.

<u>ການຮ່ວມມືດ້ານຍຸຕິທຳ</u>

29. ກອງປະຊຸມຮັບຮູ້ ແລະສະແດງຄວາມຊົມເຊີຍ ທີ່ຂະແໜງກົດໝາຍ ແລະຍຸຕິທຳຂອງສອງປະເທດ ໄດ້ໃຫ້ການຮ່ວມມື ແລະແລກປ່ຽນບົດຮຽນທາງດ້ານກົດໝາຍ ແລະຍຸຕິທຳຢ່າງສະໝ່ຳສະເໝີ ເປັນຕົ້ນການຝຶກອົບຮົມທາງດ້ານກົດໝາຍ ແລະຍຸຕິທຳ, ການຈັດກອງປະຊຸມວິຊາການຮ່ວມກັນ ແລະການແລກປ່ຽນການຢ້ຽມຢາມລະດັບສູງ ແລະວິຊາການ. ສະນັ້ນ ກອງປະຊຸມເຫັນດີໃຫ້ຂະແໜງການດັ່ງກ່າວສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືໃນດ້ານນີ້ ໃຫ້ມີປະສິດທິຜົນ ແລະໜັກແໜ້ນຍິ່ງກວ່າເກົ່າ.

<u>ການຮ່ວມມືຕ້ານການຄ້າມະນຸດ</u>

30. ກອງປະຊຸມສະແດງຄວາມຍິນດີ ທີ່ພາກສ່ວນທີ່ກ່ຽວຂ້ອງສອງຝ່າຍ ໄດ້ປຶກສາຫາລືຮ່ວມກັນແລກປ່ຽນສະພາບການໃນປະຈຸບັນກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະເດັກນ້ອຍ ໃນແງ່ຂອງການເຄື່ອນຍ້າຍແຮງງານ, ການດຳເນີນງານຮ່ວມກັນ ຕາມແຜນປະຕິບັດການຕໍ່ຕ້ານການຄ້າມະນຸດໄລຍະທີ 1 ແຕ່ປີ 2006 - 2008 ແລະກຳນົດກິດຈະກຳໃນຕໍ່ໜ້າຕາມຂົງເຂດຕ່າງໆທີ່ກຳນົດໄວ້ໃນ MOU ຂອງສອງປະເທດທີ່ໄດ້ຕົກລົງຮ່ວມກັນ.

31. ກອງປະຊຸມຮັບຊາບຜົນຂອງກອງປະຊຸມການຮ່ວມມືດ້ານການປະສານງານການຕ້ານ ການຄ້າມະນຸດລະຫວ່າງແຂວງສະຫວັນນະເຂດ-ມຸກດາຫານ ຄັ້ງທີ 1 ໃນວັນທີ 15 - 16 ທັນວາ 2008 ແລະສະໜັບ

ສະໜັບສະໜູນໃຫ້ແຂວງ ແລະຈັງຫວັດ ທີ່ມີຊາຍແດນຕິດກັນ ມີການຮ່ວມມືໃນລັກສະນະຄູ່ຮ່ວມກັນ ເພື່ອຕ້ານການຄ້າມະນຸດຕາມຊາຍແດນຢ່າງມີປະສິດທິພາບສູງຂຶ້ນ.

<u>ການຮ່ວມມືດ້ານການຈ້າງແຮງງານ</u>

32. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນຂອງກອງປະຊຸມລະດັບລັດຖະມົນຕີ ວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານ ລາວ-ໄທ ຄັ້ງທີ 1 ໄດ້ຈັດຂຶ້ນແຕ່ວັນທີ 19-20 ມິຖຸນາ 2008 ທີ່ນະຄອນຫລວງວຽງຈັນ, ຊຶ່ງໄດ້ທົບທວນຄືນເຖິງບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານຂອງສອງລັດຖະບານ ໃນປີ 2002 ຍັງບໍ່ສາມາດປະຕິບັດໄດ້ ແລະບໍ່ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ຈຶ່ງເຫັນດີໃຫ້ສອງພາກສ່ວນທີ່ກ່ຽວຂ້ອງປຶກສາຫາລືເພື່ອແກ້ໄຂບັນຫາຮ່ວມກັນໃນແຕ່ລະດ້ານໂດຍໄວ.

33. ກອງປະຊຸມຮັບຊາບດ້ວຍຄວາມຍິນດີ ຕໍ່ຄວາມຄືບໜ້າໃນການຮ່ວມມືພິສູດສັນຊາດ ໃຫ້ແກ່ແຮງງານລາວທີ່ຜິດກົດໝາຍຢູ່ໄທ, ແຕ່ວັນທີ 26 ມັງກອນ 2005 ເຖິງວັນທີ 28 ກຸມພາ 2009, ທາງການລາວໄດ້ອອກໜັງສືຜ່ານແດນຊົ່ວຄາວ ( Temporary Passport ) ໃຫ້ ແຮງງານລາວ ຈຳນວນ 56,000 ຄົນ ແລະຝ່າຍໄທຮັບຊາບວ່າ ຝ່າຍລາວກຳລັງພິຈາລະນາກ່ຽວກັບການສືບຕໍ່ການພິສູດສັນຊາດ.

34. ກອງປະຊຸມຮັບຊາບວ່າ ຝ່າຍໄທໄດ້ອອກແຈ້ງການຫລຸດຄ່າທຳນຽມວີຊາ ໃຫ້ແກ່ແຮງງານ ນຳເຂົ້າຖືກກົດໝາຍຈາກ 2,000 ບາດ ເປັນ 500 ບາດ ໃຫ້ແກ່ແຮງງານລາວ ຈຳນວນ 10,000 ຄົນ ໂດຍໄດ້ມອບໝາຍໃຫ້ສະຖານເອກອັກຄະຣາຊະທູດໄທ ທີ່ ນະຄອນຫລວງວຽງຈັນ ໃຫ້ວີຊາແກ່ແຮງງານລາວ ຕາມລາຍຊື່ທີ່ໄດ້ຮັບແຈ້ງ ຈາກກະຊວງແຮງງານ ແລະສະຫວັດດີການສັງຄົມ ສປປ ລາວ ແລະມາເຖິງວັນທີ 17 ມີນາ 2009 ຝ່າຍໄທໄດ້ອອກວີຊາໃຫ້ແກ່ແຮງງານລາວແລ້ວຈຳນວນ 3,473 ຄົນ.

35. ກອງປະຊຸມສະໜັບສະໜູນໃຫ້ເຈົ້າໜ້າທີ່ກ່ຽວຂ້ອງທັງສອງຝ່າຍເປີກສາຫາລື ກ່ຽວກັບລະບຽບການຄຸ້ມຄອງແຮງງານຊາຍແດນປະເພດ ໄປເຊົ້າ-ກັບແລງ ແລະ ປະເພດຕາມລະດູການ, ໂດຍໃຫ້ມີການອອກເອກະສານເດີນທາງສະເພາະສຳລັບແຮງງານປະເພດດັ່ງກ່າວ ໃຫ້ສາມາດຂ້າມແດນໄປ-ມາ ເພື່ອຈຸດປະສົງເຮັດວຽກໄດ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບຫລັກການທີ່ໄດ້ກຳນົດໄວ້ໃນບັນທຶກຄວາມເຂົ້າໃຈ ( MOU ) ວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານ ລາວ-ໄທ.

36. ກອງປະຊຸມສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງທັງສອງຝ່າຍ ຈັດກອງປະຊຸມເຈົ້າໜ້າທີ່ອາວຸໂສ ລາວ-ໄທ ຄັ້ງທີ VI ເພື່ອປຶກສາຫາລື ແລະຕິດຕາມຂະຫຍາຍຜົນຂອງກອງປະຊຸມລະດັບລັດຖະມົນຕີ ວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານ ລາວ-ໄທ ຄັ້ງທີ 1 ແລະ ບົດບັນທຶກຄວາມເຂົ້າໃຈ ( MOU ) ວ່າດ້ວຍການຮ່ວມມືດ້ານການຈ້າງແຮງງານ ລາວ-ໄທ ໃຫ້ເກີດຜົນເປັນຮູບປະທຳ.

**<u>ການຮ່ວມມືດ້ານເສດຖະກິດ:</u>**

**<u>ການຕົກລົງວ່າດ້ວຍກອບການຮ່ວມມືໃນການພັດທະນາເສດຖະກິດ ລາວ-ໄທ</u>**

37. ກອງປະຊຸມຮັບຊາບຄວາມຄືບໜ້າວ່າ ຝ່າຍລາວໄດ້ເປັນເຈົ້າພາບຈັດກອງປະຊຸມຮ່ວມລາວ-ໄທ ເພື່ອສ້າງແຜນກອບການຮ່ວມມື ໃນການພັດທະນາເສດຖະກິດລາວ-ໄທ ຄັ້ງວັນທີ 27 ສິງຫາ 2007 ທີ່ນະຄອນຫລວງວຽງຈັນ ແລະ ໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍ ໄດ້ໃຫ້ການສະໜັບສະໜູນຂໍ້ມູນແລະ ການດຳເນີນການທີ່ກ່ຽວຂ້ອງ ໃນການສ້າງກອບການຮ່ວມມືໃນການພັດທະນາເສດຖະກິດລະຫວ່າງ ລາວ-ໄທ ທີ່ຝ່າຍໄທໄດ້ຈ້າງບໍລິສັດທີ່ປຶກສາ ດຳເນີນການສຳເລັດແລ້ວໃນເດືອນທັນວາ 2008 ແລະ ສະໜັບສະໜູນໃຫ້ພາກສ່ວນທີ່ກ່ຽວຂ້ອງ ຮ່ວມມືກັນຢ່າງຕໍ່ເນື່ອງຕໍ່ໄປ.

**<u>ການຮ່ວມມືດ້ານໄຟຟ້າ ແລະພະລັງງານອື່ນໆ:</u>**

38. ກອງປະຊຸມສະແດງຄວາມຍິນດີ ຕໍ່ຜົນການພົບປະລະຫວ່າງ ນາຍົກລັດຖະມົນຕີລາວ-ໄທ ໃນໂອກາດການຢ້ຽມຢາມ ສປປ ລາວ ຢ່າງເປັນທາງການຂອງນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນວັນທີ 23 ມັງກອນ 2009 ແລະ ການພົບປະຫາລື ຂອງ ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານຂອງ ສປປ ລາວ ກັບ ພະນະທ່ານ ອະພິສິດ ເວດຊະຊີວະ, ນາຍົກລັດຖະມົນຕີຂອງຣາຊະອານາຈັກໄທ ຄັ້ງວັນທີ 9 ມີນາ 2009 ຊຶ່ງຝ່າຍໄທໄດ້ຢືນຢັນຄວາມພ້ອມຮັບຊື້ ກະແສໄຟຟ້າຈາກໂຄງການຕ່າງໆໃນ ສປປ ລາວ ຈຳນວນ 7000 MW ພາຍໃນ ຫລື ຫລັງ ປີ 2015 ຕາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືໃນການພັດທະນາໄຟຟ້າໃນ ສປປ ລາວ ສະບັບລົງວັນທີ 22 ທັນວາ 2007.

39. ກອງປະຊຸມຮັບຊາບການໝົດອາຍຸ ແລະ ຍົກເລີກ Tariff MOU ລະຫວ່າງການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ກັບກຸ່ມຜູ້ລົງທຶນໃນໂຄງການຕ່າງໆ ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານການພັດທະນາໄຟຟ້າລາວ-ໄທ ຈຳນວນ 5 ໂຄງການ ເນື່ອງຈາກວິກິດການເງິນໂລກ ໄດ້ແກ່ ໂຄງການນ້ຳງື່ມ 3, ໂຄງການນ້ຳເທີນ 1, ໂຄງການນ້ຳງຽບ 1, ໂຄງການຫົງສາລິກໄນ ແລະ ໂຄງການນ້ຳອູ. ຢ່າງໃດກໍ່ຕາມ ຝ່າຍໄທມີຄວາມຍິນດີ ທີ່ຈະເຈລະຈາ Tariff MOU ກັບຜູ້ພັດທະນາໂຄງການທັງ 5 ໂຄງການດັ່ງກ່າວ ລວມທັງໂຄງການເຊປຽນ-ເຊນ້ຳນ້ອຍ, ໂຄງການດອນສະໂຮງ, ໂຄງການເຊກອງ 4, ໂຄງການນ້ຳກົງ 1 ແລະ ໂຄງການນ້ຳບາກ.

40. ກອງປະຊຸມຮັບຊາບ ຝ່າຍລາວໄດ້ສະເໜີໃຫ້ຝ່າຍໄທພິຈາລະນາລາຄາໄຟຟ້າຂອງໂຄງການເຂື່ອນ ໄຟຟ້ານ້ຳງື່ມ 2 ທີ່ໄດ້ຮັບຜົນກະທົບ ຈາກວິກິດການເສດຖະກິດໂລກ.

41. ກອງປະຊຸມຮັບຊາບວ່າ ລັດຖະບານລາວເຫັນດີໃຫ້ມີການສຶກສາຄວາມເປັນໄປໄດ້ ໃນການກໍ່ສ້າງເຂື່ອນໄຟຟ້າຕາມລຳນ້ຳຂອງ ຊຶ່ງທັງສອງຝ່າຍຈະໄດ້ຮ່ວມກັນປຶກສາຫາລື ກ່ຽວກັບໂຄງການເຂື່ອນຕາມລຳແມ່ນ້ຳຂອງ ທີ່ມີຄວາມຄືບໜ້າຫລາຍທີ່ສຸດເຊັ່ນ ໂຄງການ ຢູ່ແຂວງໄຊຍະບູລີ ໂດຍຝ່າຍໄທມີຄວາມຍິນດີທີ່ຈະເຈລະຈາ Tariff MOU ກັບຜູ້ພັດທະນາ ໂຄງການຕໍ່ໄປ.

42. ການຊຳລະຄ່າກະແສໄຟຟ້າ ທີ່ ສປປ ລາວ ຊື້ຈາກການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ເກີນກ່ວາທີ່ສົ່ງອອກນັ້ນ, ທັງສອງຝ່າຍໄດ້ເຫັນດີ ໃຫ້ບໍລິສັດລັດວິສາຫະກິດໄຟຟ້າລາວ ໃຊ້ແທນດ້ວຍພະລັງງານໄຟຟ້າ ຕາມຈຳນວນທີ່ຊື້ເກີນນັ້ນ ໂດຍກຳນົດເອົາໄລຍະສົ່ງຄືນແຕ່ປີ 2011-2013.

43. ການກໍ່ສ້າງສະຖານີ/ສາຍສົ່ງ 500 KV ແຕ່ບ້ານນອກ ແຂວງອັດຕະປື ຫາ ຈັງຫວັດ ອຸບົນຣາຊະທານີ, ປະຈຸບັນໂຄງການດັ່ງກ່າວ ຢູ່ໃນໄລຍະການສຶກສາຄວາມເປັນໄປໄດ້ ຂອງໂຄງການ ດອນສະໂຮງ, ໂຄງການເຊປຽນ-ເຊນ້ຳນ້ອຍ ແລະ ໂຄງການອື່ນໆ ທີ່ ມີຄວາມເປັນໄປໄດ້ໃນການກໍ່ສ້າງສາຍສົ່ງ 500 KV ແຕ່ບ້ານນອກ ຫາ ອຸບົນຣາຊະທານີ ຊຶ່ງຝ່າຍໄທ ໄດ້ມອບໃຫ້ການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ ເປັນຜູ້ດຳເນີນການສຶກສາເບື້ອງຕົ້ນ ແລະ ການໄຟຟ້າຝ່າຍຜະລິດ ແຫ່ງປະເທດໄທ ໄດ້ປະສານງານກັບບໍລິສັດລັດວິສາຫະກິດໄຟຟ້າລາວ ໃຫ້ກຳນົດຈຸດສະຖານີໄຟຟ້າ ທີ່ເໝາະສົມສຳລັບໂຄງການຢູ່ພາກໃຕ້ຂອງ ສປປ ລາວ ແທນສະຖານີໄຟຟ້າຈາກບ້ານນອກ.

44. ກອງປະຊຸມຮັບຊາບການຮ່ວມມືລະຫວ່າງ ການຝ່າຍໄຟຟ້າສ່ວນພູມີ ກັບລັດວິສາຫະກິດໄຟຟ້າລາວ ໃນການຊື້-ຂາຍໄຟຟ້າລະດັບແຮງດັນ 22 KV ຕາມບໍລິເວນລວມ 5 ຈຸດ ແລະ ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍ ການຮ່ວມມືລະຫວ່າງກັນເພື່ອການແລກປ່ຽນເຕັກໂນໂລຊີ ຂ່າວສານ ແລະ ການພັດທະນາບຸກຄະລາກອນ ລວມທັງຝ່າຍໄທຮັບພິຈາລະນາຂໍ້ສະເໜີຂອງຝ່າຍລາວ ທີ່ຂໍໃຫ້ພິຈາລະນາເສີມລະບົບໄຟຟ້າ ໃນຈຸດທີ່ໄດ້ດຳເນີນການແລ້ວ ໃຫ້ມີຄວາມໝັ້ນຄົງ ແລະ ພຽງພໍຫລາຍຂຶ້ນ ລວມທັງການເຂົ້າໄປລົງທຶນດ້ານທຸລະກິດໄຟຟ້າໃນ ສປປ ລາວ.

45. ກອງປະຊຸມຮັບຊາບການຮ່ວມມືດ້ານວິຊາການ ໃນສາຂາພະລັງງານ ຊຶ່ງຝ່າຍໄທໄດ້ຈັດຫລັກສູດຝຶກອົບຮົມດ້ານການຈັດການພະລັງງານ ໃຫ້ແກ່ເຈົ້າໜ້າທີ່ລະດັບສູງຂອງ ສປປ ລາວ ໃນປີ 2008 ແລະ ທີ່ຈະຈັດໃນຂັ້ນໃນປີ 2009 ແລະ ສະແດງຄວາມຍິນດີຕໍ່ການຮ່ວມມືດ້ານພະລັງງານທົດແທນ ແລະ ອະນຸລັກພະລັງງານລະຫວ່າງລາວ-ໄທ ທັງໃນຂອບທະວີພາຄີ ແລະພາຍໃຕ້ກອບ ACMECS ຊຶ່ງດຳເນີນມາຢ່າງຕໍ່ເນື່ອງ ແລະປະກົດຜົນເປັນຮູບປະທຳ ເພື່ອເສີມສ້າງຄວາມໝັ້ນຄົງດ້ານພະລັງງານ ແລະ ພັດທະນາດ້ານເສດຖະກິດ ໃນອະນຸພາກພື້ນ ໃຫ້ມີການຂະຫຍາຍຕົວໄປພ້ອມໆກັນຢ່າງໝັ້ນຄົງ.

<u>ການຮ່ວມມືດ້ານໂຍທາທິການ ແລະ ຂົນສົ່ງ, ໂທລະຄົມມະນາຄົມ ແລະ ໄປສະນີ:</u>

<u>ການຮ່ວມມືດ້ານການຂົນສົ່ງທາງບົກ:</u>

46. ກອງປະຊຸມສະແດງຄວາມຍິນດີ ທີ່ໜ່ວຍງານດ້ານການຂົນສົ່ງ ລາວ-ໄທ ມີການປະສານງານ ແລະ ຮ່ວມມືກັນຢ່າງໃກ້ຊິດ ໃນການແກ້ໄຂບັນຫາຄວາມບໍ່ສະດວກຕ່າງໆ ທາງດ້ານການຂົນສົ່ງສິນຄ້າ ແລະ ການສັນຈອນຂອງຍານພາຫະນະມີຈຳນວນເພີ່ມຂຶ້ນ ເຊິ່ງຊ່ວຍໃຫ້ເກີດມີການແຂ່ງຂັນ ແລະ ນຳໄປສູ່ການຫຼຸດຕົ້ນທຶນການຂົນສົ່ງສິນຄ້າລົງເປັນລຳດັບ ແລະ ສະໜັບສະໜູນໃຫ້ມີການປະເມີນຜົນການຮ່ວມມືດັ່ງກ່າວ ຢ່າງຕໍ່ເນື່ອງ.

47. ກອງປະຊຸມຮັບຊາບຜົນການຈັດຕັ້ງປະຕິບັດວຽກງານການຂົນສົ່ງໂດຍສານລະຫວ່າງ ລາວ-ໄທ ຊຶ່ງປະຈຸບັນໄດ້ເປີດເດີນລົດໂດຍສານປະຈຳທາງລະຫວ່າງລາວ-ໄທ ຈຳນວນ 5 ເສັ້ນທາງຄື: 1) ນະຄອນຫຼວງວຽງຈັນ-ໜອງຄາຍ 2) ນະຄອນຫຼວງວຽງຈັນ-ອຸດອນທານີ, 3) ປາກເຊ-ອຸບົນຣາຊະທານີ, 4) ສະຫວັນນະເຂດ-ມຸກດາຫານ ແລະ 5) ນະຄອນຫຼວງວຽງຈັນ-ຂອນແກ່ນ ໂດຍ 4 ເສັ້ນທາງທຳອິດ ມີປະສິດທິຜົນດີ ມີຜູ້ໂດຍສານຊົມໃຊ້ຫຼາຍ ແລະ ມີທ່າອ່ຽງເພີ່ມຂຶ້ນຕາມລຳດັບ, ສ່ວນເສັ້ນທາງ ນະຄອນຫຼວງວຽງຈັນ-ຂອນແກ່ນ ເຫັນວ່າມີຜູ້ໂດຍສານໃຊ້ບໍລິການຈຳນວນບໍ່ຫຼາຍ ເນື່ອງຈາກເປັນເສັ້ນທາງເປີດໃໝ່ ແລະ ເພື່ອອຳນວຍຄວາມສະດວກ ແລະສົ່ງເສີມການທ່ອງທ່ຽວ ທັງສອງຝ່າຍສະໜັບສະໜູນໃຫ້ພາກສ່ວນທີ່ກ່ຽວຂ້ອງ ປຶກສາຫາລືຮ່ວມກັນກ່ຽວກັບ ບັນຫາການນຳໃຊ້ບັດຜ່ານແດນ (BORDER PASS) ເບື້ອງໄທ ໃຫ້ສາມາດເດີນທາງຮອດຈັງຫວັດຂອນແກ່ນ ແລະ ເບື້ອງລາວ ຮອດເມືອງວັງວຽງ, ແຂວງວຽງຈັນ ແລະ ການຍົກເວັ້ນຄ່າຜ່ານຂົວ ໃຫ້ແກ່ລົດຂົນສົ່ງໂດຍສານປະຈຳທາງລະຫວ່າງລາວ-ໄທ ສາຍທາງຢູ່ຈຸດຂົວມິດຕະພາບ 1 ນະຄອນຫຼວງວຽງຈັນ-ໜອງຄາຍ, ຂົວມິດຕະພາບ ລາວ - ຍີ່ປຸ່ນ ແລະ ຂົວອື່ນໆ ລະຫວ່າງລາວ - ໄທ ທີ່ກຳລັງຈະກໍ່ສ້າງ.

ສ່ວນລາຄາຄ່າຂົນສົ່ງຜູ້ໂດຍສານຂອງລົດຂົນສົ່ງໂດຍສານປະຈຳທາງລະຫວ່າງ ລາວ - ໄທ ແມ່ນມອບໃຫ້ເຈົ້າໜ້າທີ່ກ່ຽວຂ້ອງເປັນຜູ້ກຳນົດຕາມຄວາມເໝາະສົມໃນແຕ່ລະເສັ້ນທາງ.

48. ກອງປະຊຸມເຫັນດີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຂອງທັງສອງຝ່າຍສຳຫຼວດຄວາມເປັນໄປໄດ້ໃນການເປີດການແລ່ນລົດໂດຍສານ ລະຫວ່າງລາວ-ໄທ ຕື່ມອີກຈຳນວນ 8 ສາຍທາງ ຊຶ່ງທັງສອງຝ່າຍໄດ້ຮ່ວມມືກັນສຳຫຼວດແລ້ວ 5 ສາຍທາງຄື: 1) ຫຼວງພະບາງ-ອຸດົມໄຊ-ຫຼວງນ້ຳທາ-ບໍ່ແກ້ວ -ຊຽງຮາຍ-ຊຽງໃໝ່, 2) ບໍ່ເຕັນ ( ຫຼວງນ້ຳທາ ) -ຫ້ວຍຊາຍ - ຊຽງຂອງ - ຊຽງຮາຍ, 3) ຫ້ວຍຊາຍ-ຊຽງຂອງ, 4) ຄຳມ່ວນ-ນະຄອນພະນົມ ແລະ 5) ນະຄອນຫຼວງວຽງຈັນ-ບາງກອກ ແລະ ຈະເລັ່ງລັດໃຫ້ສຳຫຼວດເພີ່ມອີກ 3 ສາຍທາງ ຄື: 1) ປາກເຊ-ອຸບົນຣາຊະທານີ-ບາງກອກ, 2) ຜົ້ງສາລີ-ອຸດົມໄຊ-ຫຼວງນ້ຳທາ-ບໍ່ແກ້ວ-ຊຽງຮາຍ-ຊຽງໃໝ່, 3) ນະຄອນຫຼວງວຽງຈັນ-ນະຄອນຣາຊະສີມາ.

49. ກອງປະຊຸມຮັບຊາບຜົນການປຶກສາຫາລືລະຫວ່າງ ຜູ້ແທນຂອງບໍລິສັດ ປຕທ. ຈຳກັດມະຫາຊົນແຫ່ງປະເທດໄທ ແລະ ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ ໃນເດືອນມັງກອນ 2009 ກ່ຽວກັບການຂົນສົ່ງ ຜະລິດຕະພັນປິໂຕຣລຽມ ຜ່ານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ໄປຍັງສາທາລະນະລັດ ປະຊາຊົນຈີນ ໂດຍຈະສະໜັບສະໜູນໃຫ້ມີການຈັດຕັ້ງບໍລິສັດ ຮ່ວມທຶນລະຫວ່າງ ບໍລິສັດໄທ ແລະລາວ ເພື່ອດຳເນີນການຂົນສົ່ງຜ່ານແດນ.

<u>ການຮ່ວມມື ດ້ານການພັດທະນາເຄືອຂ່າຍຄົມມະນາຄົມ ເຊື່ອມໂຍງ ລາວ-ໄທ</u>

50. ກອງປະຊຸມຮັບຊາບສະພາບການ ແລະ ປຶກສາຫາລື ກ່ຽວກັບແນວທາງການດຳເນີນໂຄງການ ພັດທະນາເຄືອຂ່າຍຄົມມະນາຄົມ ເພື່ອເຊື່ອມໂຍງ ລາວ-ໄທ ຊຶ່ງປະກອບມີໂຄງການການພັດທະນາ ເສັ້ນທາງ, ເສັ້ນທາງລົດໄຟ, ການກໍ່ສ້າງຂົວຂ້າມແມ່ນ້ຳຂອງ ແລະ ການພັດທະນາສະໜາມບິນ ດັ່ງລຸ່ມນີ້:

## ໂຄງການກໍ່ສ້າງເສັ້ນທາງຄົມມະນາຄົມ

- ໂຄງການກໍ່ສ້າງເສັ້ນທາງຫ້ວຍໂກນ (ນ່ານ)-ປາກແບ່ງ (ອຸດົມໄຊ) ໄລຍະທາງ 49,22 ກິໂລແມັດ, ຊຶ່ງໄດ້ລົງມືກໍ່ສ້າງໃນວັນທີ 1 ມັງກອນ 2007 ແລະຈະສຳເລັດໃນເດືອນມັງກອນ 2010 ເພື່ອເຮັດໃຫ້ການນຳໃຊ້ເສັ້ນທາງດັ່ງກ່າວມີປະສິດທິຜົນສູງ ກອງປະຊຸມຮັບຊາບ ການສະເໜີຂອງຝ່າຍລາວທີ່ຂໍໃຫ້ຝ່າຍໄທ ພິຈາລະນາຊ່ວຍເຫຼືອໃນການກໍ່ສ້າງ ຂົວຂ້າມນ້ຳຂອງ ທີ່ປາກແບ່ງ ແຂວງອຸດົມໄຊ.
- ໂຄງການກໍ່ສ້າງທາງຂຶ້ນລົງ (RAMP) ບໍລິເວນທ່າເຮືອບ້ານເວີນໄຕ້ ແຂວງຄຳມ່ວນ ແລະໂຄງການກໍ່ສ້າງເສັ້ນທາງເຊື່ອມຕໍ່ຈາກທ່າເຮືອບ້ານເວີນໄຕ້ ແຂວງຄຳມ່ວນ-ເສັ້ນທາງໝາຍເລກ 13 ມີການມອບ-ຮັບ ລະຫວ່າງລັດຖະມົນຕີວ່າການກະຊວງໂຍທາທິການ ແລະຂົນສົ່ງ ກັບລັດຖະມົນຕີວ່າການກະຊວງຄົມມະນາຄົມ ໃນວັນທີ 17 ສິງຫາ 2007.
- ໂຄງການກໍ່ສ້າງຮ່ອງລະບາຍນ້ຳ ແລະ ປັບປຸງເສັ້ນທາງ T2 ທີ່ ນະຄອນຫຼວງວຽງຈັນ ໄດ້ລົງມືກໍ່ສ້າງແຕ່ວັນທີ 6 ກຸມພາ 2006 ສຳເລັດໃນວັນທີ 6 ພຶດສະພາ 2007 ແລະມີການມອບ-ຮັບ ລະຫວ່າງນາຍົກລັດຖະມົນຕີຂອງທັງສອງປະເທດ ໃນວັນທີ 3 ພະຈິກ 2007.
- ກອງປະຊຸມສະແດງຄວາມຍິນດີ ທີ່ໂຄງການປັບປຸງ ແລະ ກໍ່ສ້າງຖະໜົນໃນເມືອງຫລວງພະບາງ ຈາກຖະໜົນສັງຄະໂລກ-ຖະໜົນ 13 ເໜືອ ໃນໄລຍະທາງ 1,5 ກມ ໄດ້ສຳເລັດ ແລະຈັດພິທີມອບ-ຮັບ ໃນວັນທີ 25 ມີນາ 2009 ໂດຍລັດຖະມົນຕີວ່າການກະຊວງຕ່າງປະເທດຂອງລາວ ແລະ ໄທ ເປັນປະທານຮ່ວມ.

## ໂຄງການກໍ່ສ້າງທາງລົດໄຟ

- ໂຄງການກໍ່ສ້າງເສັ້ນທາງລົດໄຟ ຈາກຈຸດກາງຂົວມິດຕະພາບ ເຖິງສະຖານີທ່ານາແລ້ງ ໄລຍະທາງ 3.5 ກິໂລແມັດ ໄດ້ຈັດພິທີມອບ-ຮັບ ແລະເປີດການນຳໃຊ້ເສັ້ນທາງລົດໄຟ ລະຫວ່າງ ລັດຖະມົນຕີວ່າການກະຊວງໂຍທາທິການ ແລະຂົນສົ່ງ ກັບລັດຖະມົນຕີວ່າການກະຊວງຄົມມະນາຄົມໄທ ໂດຍການເປັນປະທານກິດຕິມະສັກຮ່ວມລະຫວ່າງ ພະນະທ່ານ ບຸນຍັງ ວໍລະຈິດ, ຮອງປະທານປະເທດ ແລະສົມເດັດພະເທບ ຣາຊະສຸດາ ສະຫຍາມບໍຣົມ ຣາຊະກຸມາລີ ໃນວັນທີ 5 ມີນາ 2009.
- ໂຄງການກໍ່ສ້າງທາງລົດໄຟ ຈາກສະຖານີທ່ານາແລ້ງເຖິງສະຖານີວຽງຈັນ ໄລຍະທາງ 9 ກມ ລັດຖະ ບານຝຣັ່ງໃຫ້ການສະໜັບສະໜູນງົບປະມານເພື່ອດຳເນີນການສຶກສາລາຍລະອຽດຂອງໂຄງ ການ ຂະຫຍາຍເສັ້ນທາງລົດໄຟ ໄດ້ສຳເລັດໃນວັນທີ 8 ສິງຫາ 2008 ແລະ ລັດຖະບານໄທເຫັນດີສະໜັບສະໜູນງົບປະມານໃນສູດ 70/30 % ແລະຊ່ວຍເຫລືອໃນການສຳຫລວດອອກແບບ.

- ເພື່ອເຮັດໃຫ້ການຂົນສົ່ງທາງລົດໄຟມີປະສິດທິຜົນສູງ ແລະ ເປັນພື້ນຖານການຂະຫຍາຍເສັ້ນທາງເຊື່ອມຕໍ່ກັບອະນຸພາກພື້ນ, ສອງຝ່າຍເຫັນດີໃຫ້ ມີການຂົນສົ່ງສິນຄ້າທາງລົດໄຟ ລະຫວ່າງປະເທດຮ່ວມກັນ ໂດຍມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງສອງຝ່າຍ ປຶກສາຫາລືລາຍລະອຽດໂດຍໄວ.

<u>ໂຄງການກໍ່ສ້າງຂົວຂ້າມແມ່ນ້ຳຂອງ</u>

- ກອງປະຊຸມສະແດງຄວາມຍິນດີ ຕໍ່ການນຳໃຊ້ຂົວມິດຕະພາບ 2 ( ສະຫວັນນະເຂດ-ມຸກດາຫານ ) ໃນວັນທີ 20 ທັນວາ 2006 ໂດຍການເປັນປະທານຮ່ວມລະຫວ່າງ ພະນະທ່ານ ບຸນຍັງ ວໍລະຈິດ, ຮອງປະທານປະເທດ ແລະ ສົມເດັດພະເທບ ຣາຊະສຸດາ ສະຫຍາມບໍຣົມ ຣາຊະກຸມາລີ ໂດຍມີນາຍົກລັດຖະມົນຕີຂອງສາມປະເທດ ( ລາວ-ຫວຽດນາມ-ໄທ ) ເຂົ້າຮ່ວມ ແລະ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດຍີ່ປຸ່ນ. ປັດຈຸບັນໄດ້ມີການຂົນສົ່ງສິນຄ້າ ແລະ ເປີດເສັ້ນທາງລົດໂດຍສານລະຫວ່າງສອງປະເທດ ແລະມີປະລິມານຜູ້ຊົມໃຊ້ເປັນຈຳນວນຫລາຍ ເຊິ່ງເປັນໄປຕາມແຜນການ ທີ່ກຳໜົດໄວ້.
- ກອງປະຊຸມສະແດງຄວາມຍິນດີຕໍ່ການຈັດພິທີວາງສີລາລືກການກໍ່ສ້າງຂົວມິດຕະພາບ 3 ( ທ່າແຂກ-ນະຄອນພະນົມ) ໃນວັນທີ 6 ມີນາ 2009 ລະຫວ່າງ ພະນະທ່ານ ບຸນຍັງ ວໍລະຈິດ, ຮອງປະທານປະເທດ ແລະ ສົມເດັດພະເທບ ຄາດວ່າການກໍ່ສ້າງສາມາດລົງມືໄດ້ໃນເດືອນ ມິຖຸນາ 2009 ແລະຈະສຳເລັດໃນປີ 2012.
- ກອງປະຊຸມຮັບຊາບດ້ວຍຄວາມຍິນດີ ທີ່ຝ່າຍໄທ ແລະ ຈີນ ກຳລັງປຶກສາຫາລືຮ່ວມກັນກ່ຽວກັບຂໍ້ຕົກລົງທາງການເງິນ ໃນການກໍ່ສ້າງ ຂົວມິດຕະພາບ 4 (ຫ້ວຍຊາຍ-ຊຽງຂອງ) ເພື່ອໃຫ້ສາມາດລົງມືການກໍ່ສ້າງພາຍໃນປີ 2009.

<u>ໂຄງການພັດທະນາສະໜາມບິນ</u>

- ກອງປະຊຸມຮັບຊາບດ້ວຍຄວາມຍິນດີ ຕໍ່ໂຄງການພັດທະນາສະໜາມບິນປາກເຊ ແຂວງຈຳປາສັກ ຊຶ່ງໄດ້ລົງມືກໍ່ສ້າງໃນເດືອນ ມີນາ 2008 ແລະຈະສຳເລັດຕາມແຜນການ.
- ສຳລັບໂຄງການພັດທະນາສະໜາມບິນສະຫວັນນະເຂດ ຄະນະສຳຫລວດຂອງ JICA ໄດ້ເລີ່ມສຳຫລວດຂໍ້ມູນພື້ນຖານ ແຕ່ວັນທີ 14 ພະຈິກ 2005 - 26 ທັນວາ 2005, ສຳຫລວດເພີ່ມເຕີມອີກ ແຕ່ວັນທີ 20 - 22 ມັງກອນ 2006 ແລະໄດ້ປະຊຸມຮ່ວມກັນສາມຝ່າຍໄດ້ 3 ຄັ້ງແລ້ວ, ຄັ້ງຫລ້າສຸດວັນທີ 21 ກັນຍາ 2007 ທີ່ນະຄອນຫລວງວຽງຈັນ, ສປປ ລາວ ໂດຍທັງສອງຝ່າຍຕົກລົງເຫັນດີທາງດ້ານ ຫລັກການ ທີ່ຈະຮ່ວມມືກັນ ພັດທະນາສະໜາມບິນລະດັບພາກພື້ນ ໂດຍຕົກລົງມອບໃຫ້ຝ່າຍໄທ (ສຳນັກງານຄະນະກຳມະການພັດທະນາເສດຖະກິດແຫ່ງຊາດໄທ) <u>ເປັນເຈົ້າການ</u> ຮ່າງເອກະສານແນວ ຄວາມຄິດ(concept paper) ເພື່ອສະເໜີຂໍອະນຸມັດຈາກລັດຖະບານທັງສອງປະເທດ.

ໂຄງການທີ່ສະເໜີໃໝ່ ແລະ ໂຄງການກໍາລັງພິຈາລະນາໂດຍຝ່າຍໄທ

- ການພັດທະນາເສັ້ນທາງທົ່ງສາ-ຫລວງພະບາງ ແລະ ຂົວຂ້າມນ້ຳຂອງ ກອງປະຊຸມມອບໝາຍໃຫ້ເຈົ້າໜ້າທີ່ດ້ານເຕັກນິກຝ່າຍລາວ-ໄທ ຮີບຮ້ອນດໍາເນີນການສໍາຫລວດຂໍ້ມູນ ແລະ ລາຍລະອຽດ ຂອງໂຄງການ ເພື່ອເປັນຂໍ້ມູນໃນການພິຈາລະນາ.
- ໂຄງການສ້າງຂົວ ບ້ານຫາດ-ບ້ານນາ (ເມືອງໂຂງ, ແຂວງຈໍາປາສັກ), ກອງປະຊຸມຮັບຊາບຂໍ້ສະເໜີ ຂອງຝ່າຍລາວວ່າ ໂຄງການນີ້ແມ່ນໂຄງການ ທີ່ເປັນຜົນມາຈາກຂອງກອງປະຊຸມຄະນະລັດຖະບານ ຮ່ວມລາວ-ໄທ ຄັ້ງທີ 1 ເຊິ່ງຂົວນີ້ຈະຮອງຮັບການທ່ອງທ່ຽວ ແລະການຂົນສົ່ງສິນຄ້າໃນອະນຸພາກພື້ນ.
- ໂຄງການປັບປຸງເສັ້ນທາງເລກ 11 ( ທ່າລ້ຽວ - ປາກທອນ - ເມືອງສັງທອງ ໄລຍະທາງ 92 ກິໂລແມັດ ) ກອງປະຊຸມສະແດງຄວາມຍິນດີຕໍ່ການຊ່ວຍເຫລືອ ຂອງຝ່າຍໄທປະມານ 8.000.000 ບາດໃນການ ດໍາເນີນການສໍາຫລວດ ຄວາມເປັນໄປໄດ້ຂອງໂຄງການ ແລະ ຮັບຊາບວ່າ ຝ່າຍລາວຂໍຮັບການສະໜັບ ສະໜູນງົບປະມານໃນການກໍ່ສ້າງ ໃນຮູບການຊ່ວຍເຫລືອລ້າ ແລະ ກູ້ຢືມ ໃນສູດ 30 /70 %.
- ກອງປະຊຸມຮັບຊາບການສະເໜີຂອງຝ່າຍລາວທີ່ຈະຂໍການຊ່ວຍເຫລືອຈາກລັດຖະບານໄທ ໃນການ ກໍ່ສ້າງເສັ້ນທາງແຕ່ດ່ານພູດູ່ - ເມືອງປາກລາຍ, ແຂວງໄຊຍະບູລີ ໄລຍະທາງປະມານ 28 ກິໂລແມັດ.

ການຮ່ວມມືດ້ານການບິນ.

51. ກອງປະຊຸມຮັບຊາບດ້ວຍຄວາມຍິນດີ ທີ່ພາກສ່ວນການບິນຂອງໄທ ແລະ ລາວໄດ້ມີການປຶກສາຫາລືກັນ ແລະເປັນເອກະພາບກັນກ່ຽວກັບການເພີ່ມບ່ອນນັ່ງ ແລະຖ້ຽວບິນຂອງທັງສອງຝ່າຍ ໃຫ້ສາມາດບໍລິການການບິນລະຫວ່າງລາວ-ໄທ ໄດ້ຢ່າງມີປະສິດທິພາບ ລວມທັງການເປີດເສັ້ນທາງບິນໃໝ່ ເຊັ່ນ: ສະຫວັນນະເຂດ-ບາງກອກ, ປາກເຊ-ບາງກອກ ແລະ ຫລວງພະບາງ-ອຸດອນທານີ.

ການຮ່ວມມື ດ້ານໂທລະຄົມມະນາຄົມ ແລະ ໄປສະນີ

52. ກອງປະຊຸມຮັບຊາບຜົນການດໍາເນີນໂຄງການເຊື່ອມຕໍ່ເຄືອຂ່າຍ ອິນເຕີເນັດ ລາວ-ໄທ ທີ່ເລີ່ມດໍາເນີນການມາຕັ້ງແຕ່ ປີ 2003 ໂດຍ ບໍລິສັດ ກສທ ໂທລະຄົມມະນາຄົມ ຈໍາກັດ (ມະຫາຊົນ) ໄດ້ດໍາເນີນການເຊື່ອມຕໍ່ສາຍຟາຍເບີອອບຕິກ ລະຫວ່າງລາວ-ໄທ (Cross Border interconnection) ຈໍານວນ 3 ຈຸດ ໄດ້ແກ່ ຈຸດເຊື່ອມຕໍ່ນະຄອນຫລວງວຽງຈັນ-ໜອງຄາຍ, ຈຸດເຊື່ອມຕໍ່ວັງເຕົ່າ-ຊ່ອງເມັກ ແລະ ຈຸດເຊື່ອມຕໍ່ສະຫວັນນະເຂດ-ມຸກດາຫານ ໂດຍໄດ້ປັບປຸງສາຍໄຟເບີອອບຕິກ ຢູ່ບໍລິເວນຈຸດເຊື່ອມຕໍ່ນະຄອນຫລວງວຽງຈັນ-ໜອງຄາຍ ເພື່ອຮັບຮອງປະລິມານວົງຈອນທີ່ເພີ່ມຂຶ້ນ ແລະໄດ້ກຽມດໍາເນີນການເຊື່ອມຕໍ່ສາຍໄຟເບີອອບຕິກ ທີ່ຫ້ວຍຊາຍ-ຊຽງຂອງ ເມື່ອການກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ່ 4

(ຫ້ວຍຊາຍ-ຊຽງຂອງ) ສຳເລັດ. ກອງປະຊຸມຮັບຊາບຂໍ້ສະເໜີຂອງຝ່າຍໄທ ໃຫ້ມີການຮ່ວມມື ກໍ່ສ້າງລະບົບເຄືອຂ່າຍຟາຍເບີອອບຕິກ ລະຫວ່າງປະເທດໄທ-ລາວ-ຈີນ ຜ່ານເສັ້ນທາງ R 3 ເພື່ອການຕິດຕໍ່ລະຫວ່າງ 3 ປະເທດ ແລະ ເປັນເສັ້ນທາງສຳຮອງຂອງລະບົບໃຕ້ນ້ຳລະຫວ່າງປະເທດ ເສັ້ນທາງສິງກະໂປ-ມາເລເຊຍ-ໄທ-ລາວ ແລະ ຈີນ ແລະ ຮັບຊາບຂໍ້ສະເໜີຂອງຝ່າຍລາວ ໃຫ້ເພີ່ມຈຸດເຊື່ອມຕໍ່ລະຫວ່າງແຂວງຄຳມ່ວນ ແລະ ຈັງຫວັດນະຄອນພະນົມ ຜ່ານຂົວມິດຕະພາບລາວ-ໄທ 3 (ຄຳມ່ວນ-ນະຄອນພະນົມ).

<u>ການຮ່ວມມືດ້ານການລົງທຶນ</u>

53. ກອງປະຊຸມຮັບຊາບ ການລົງທຶນຂອງໄທໃນລາວແຕ່ປີ 2000-2008 ມີຈຳນວນ 207 ໂຄງການ ມູນຄ່າ 1,581,903,196 ໂດລາສະຫະລັດ ແລະໃນຕົ້ນປີ 2009 ມີ 7 ໂຄງການ ມູນຄ່າ 46,856,468 ໂດລາສະຫະລັດ, ຊຶ່ງທັງສອງຝ່າຍຈະໄດ້ຮ່ວມມືກັນໃນການສະໜັບສະໜູນ, ສົ່ງເສີມໃຫ້ການລົງທຶນຂອງໄທທີ່ມີຄຸນນະພາບ ເຂົ້າມາລົງທຶນໃນ ສປປ ລາວ ໃຫ້ນັບມື້ຫລາຍຂຶ້ນ ໂດຍນັກລົງທຶນຄວນມີສ່ວນຮ່ວມໃນການຊ່ວຍເຫລືອພັດທະນາສັງຄົມ ແລະຊີວິດການເປັນຢູ່ຂອງປະຊາຊົນໃນບໍລິເວນພື້ນທີ່ ແຕ່ສ່ວນໃຫຍ່ນັກລົງທຶນໄທ ຈະສຸມໃສ່ແຕ່ ຂະແໜງໄຟຟ້າ, ບໍ່ແຮ່, ບໍລິການໂທລະຄົມ. ນອກຈາກນີ້ເຫັນຄວນສົ່ງເສີມການລົງທຶນໃນຮູບແບບຂອງ Contract farming.

54. ກອງປະຊຸມຮັບຊາບການດຳເນີນກິດຈະກຳ ຂອງສຳນັກງານຄະນະກຳມາການສົ່ງເສີມການລົງທຶນ ແລະ ການຈັດກິດຈະກຳ ເພື່ອສົ່ງເສີມການລົງທຶນໃນ ສປປ ລາວ ລວມທັງມີການຮ່ວມມືກັບກະຊວງແຜນການ ແລະ ການລົງທຶນ ສປປ ລາວ ຢ່າງໃກ້ຊິດໃນການແລກປ່ຽນການຢ້ຽມຢາມ, ແລກປ່ຽນຂໍ້ມູນດ້ານການລົງທຶນ, ການຮ່ວມມືທາງວິຊາການ ຊຶ່ງກອງປະຊຸມສະໜັບສະໜູນໃຫ້ໜ່ວຍງານທັງສອງ ປຶກສາຫາລື ແລະ ຮັດແໜ້ນການຮ່ວມມື ເພື່ອສົ່ງເສີມການລົງທຶນໄທ ທີ່ມີຄຸນນະພາບ ໃນ ສປປ ລາວ ໃຫ້ເພີ່ມຫລາຍຍິ່ງຂຶ້ນ.

55. ກອງປະຊຸມສະໜັບສະໜູນໃຫ້ ຄະນະອະນຸກຳມະການສົ່ງເສີມທຸລະກິດ ລາວ-ໄທ ປະຊຸມຮ່ວມກັນ ຄັ້ງທີ 4 ຕາມຄວາມເໝາະສົມ.

56. ກອງປະຊຸມຮັບຊາບຜົນຂອງກອງປະຊຸມ ຄະນະອະນຸກຳມະການດ້ານການສຶກສາແລະວິໄຈ ລາວ-ໄທ ຄັ້ງທີ 1 ໃນວັນທີ 17-19 ກຸມພາ 2008 ທີ່ຫລວງພະບາງ ແລະ ຄັ້ງທີ 2 ໃນວັນທີ 10-11 ມີນາ 2009 ທີ່ຈັງຫວັດເພັດຊະບູລີ ໂດຍມີ ທ່ານ ບຸນເກີດ ສັງສົມສັກ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ສປປ ລາວ ແລະ ທ່ານ ເດດ ບຸນນາກ, ຜູ້ຊ່ວຍເລຂາທິການສະພາການຊາດໄທ ຝ່າຍບໍລິຫານ ເປັນປະທານຮ່ວມ ແລະ ຮັບຊາບວ່າ ຄະນະອານຸກຳມະການດັ່ງກ່າວ ໄດ້ດຳເນີນໂຄງການສຶກສາວິໄຈໃນຫົວຂໍ້ "ກົດລະບຽບດ້ານການຂົນສົ່ງສິນຄ້າຂ້າມແດນ ແລະ ການຂົນສົ່ງສິນຄ້າຜ່ານແດນລະຫວ່າງລາວ-ໄທ" ມີວັດຖຸປະສົງ ເພື່ອສະແຫວງຫາຊ່ອງທາງອຳນວຍຄວາມສະດວກ ໃນການຂົນສົ່ງສິນຄ້າ ແລະ ແກ້ໄຂບັນຫາອຸປະສັກ ເພື່ອສົ່ງເສີມການຮ່ວມມືດ້ານເສດຖະກິດລະຫວ່າງລາວ-ໄທ

ແລະ ໃນອານຸພາກພື້ນ ໂດຍຈະນຳສະເໜີຜົນການສຶກສາ ລວມທັງຂໍ້ແນະນຳ ໃຫ້ກອງປະຊຸມຄະນະກຳມາທິການລ່ວມດ້ວຍການຮ່ວມມືລາວ-ໄທ ຄັ້ງຕໍ່ໄປພິຈາລະນາ.

<u>ການຮ່ວມມືດ້ານການຄ້າ</u>

57. ກອງປະຊຸມຮັບຊາບວ່າ ການຄ້າລະຫວ່າງລາວ-ໄທ ປະກອບມີການຄ້າຊາຍແດນ ແລະ ການຄ້າຜ່ານແດນ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນປີ 2008 ມີມູນຄ່າ 2,217,000,000 ດອນລາສະຫະລັດ

58. ກອງປະຊຸມຮັບຊາບຜົນໄດ້ການຂອງສະຖານເອກອັກຄະຣາຊະທູດໄທ ທີ່ນະຄອນຫຼວງວຽງຈັນ ນຳຄະນະນັກທຸລະກິດລາວ ໃນສາຂາການກະສິກຳເດີນທາງໄປຢ້ຽມຢາມ ປະເທດໄທ ຄັ້ງທີ 9 ແຕ່ວັນທີ 22-25 ກັນຍາ 2008 ແລະ ສະໜັບສະໜູນໃຫ້ດຳເນີນການຢ່າງຕໍ່ເນື່ອງ ເພື່ອສົ່ງເສີມການສົ່ງອອກສິນຄ້າກະສິກຳຂອງລາວມາໄທ ແລະ ສະໜັບສະໜູນການຮ່ວມມືໃນການຈັດທັດສະນະສຶກສາໃຫ້ແກ່ພາກລັດ ແລະເອກະຊົນຂອງລາວ ກ່ຽວກັບການປະກອບທຸລະກິດ ແລະຜະລິດສິນຄ້າປະເພດຕ່າງໆ.

59. ກອງປະຊຸມເຫັນດີໃຫ້ພາກສ່ວນທີ່ກ່ຽວຂ້ອງສອງຝ່າຍ ປຶກສາຫາລືກ່ຽວກັບການຈັດຕັ້ງການບໍລິການຈຸດດຽວ (One Stop Service) ເພື່ອອຳນວຍຄວາມສະດວກໃຫ້ແກ່ຄ້າຂາຍ ແລະການຂົນສົ່ງສິນຄ້າລະຫວ່າງລາວ-ໄທ ໃຫ້ມີປະສິດທິພາບສູງຂຶ້ນ ໂດຍເລືອກເອົາຈຸດໃດໜຶ່ງເປັນຈຸດທົດລອງ.

60. ກອງປະຊຸມຮັບຊາບ ແລະ ສະໜັບສະໜູນການຮ່ວມມື ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ກັບ ກະຊວງພານິດ ຕາມບົດບັນທຶກແຜນການຮ່ວມມືລະຫວ່າງໜ່ວຍງານທັງສອງລົງນາມໃນວັນທີ 27 ທັນວາ 2006 ລວມທັງການທີ່ກະຊວງພານິດ ໄດ້ໃຫ້ການຊ່ວຍເຫຼືອນັກທຸລະກິດລາວ ເຂົ້າຮ່ວມງານສະແດງສິນຄ້ານາໆຊາດ ທີ່ປະເທດໄທ ໃນໄລຍະທີ່ຜ່ານມາ ແລະ ຝ່າຍໄທ ຍິນດີໃຫ້ການຮ່ວມມືໃນການຈັດສຳມະນາ ຝຶກອົບຮົມໃຫ້ຄວາມຮູ້ຄວາມເຂົ້າໃຈດ້ານການຄ້າ ແລະ ການລົງທຶນໃຫ້ເຈົ້າໜ້າທີ່ ແລະ ນັກທຸລະກິດລາວ ເພື່ອອຳນວຍຄວາມສະດວກດ້ານການຄ້າ ແລະ ການລົງທຶນ ແລະ ຫຼຸດອຸປະສັກລະຫວ່າງກັນ ໂດຍສະເພາະໃນເສັ້ນທາງແລວເສດຖະກິດຕາເວັນອອກຕາເວັນຕົກ ກັບປະເທດໄທ ຕາມເສັ້ນທາງເລກ 3 ແລະ ເລກ 9.

61. ກອງປະຊຸມສະໜັບສະໜູນໃຫ້ໜ່ວຍງານ ທີ່ກ່ຽວຂ້ອງຂອງທັງສອງຝ່າຍ ເພີ່ມຄວາມເຂັ້ມງວດໃນການປ້ອງກັນການລັກລອບສົ່ງອອກອາຍແກສທຸງຕົ້ມ ຈາກປະເທດໄທ ໄປຍັງ ສປປ ລາວ.

<u>ການຮ່ວມມືດ້ານການເງິນ ແລະ ພາສີ</u>

62. ກອງປະຊຸມ ສະໜັບສະໜູນໃຫ້ກົມພາສີ ແລະ ກົມກ່ຽວຂ້ອງຂອງກະຊວງການເງິນຂອງ ສປປ ລາວ ກັບກົມສຸນລະກາກອນ, ກົມການພະສາມິດ ແລະ ກົມກ່ຽວຂ້ອງ ຂອງກະຊວງການຄັງໄທ ແຫ່ງປະເທດໄທ ມີການພົບປະປະສານງານຢ່າງໃກ້ຊິດ ແລະ ປະຊຸມປຶກສາຫາລື ກ່ຽວກັບການຮ່ວມມືດ້ານພາສີ ຢ່າງຕໍ່ເນື່ອງ ເພື່ອອຳນວຍຄວາມສະດວກ ດ້ານການຄ້າແລະການຂົນສົ່ງສິນຄ້າຂ້າມແດນ ແລະ ຜ່ານແດນໄປ ແລະກັບປະເທດທີສາມ.

63. ກອງປະຊຸມຮັບຊາບ ແລະ ສະໜັບສະໜູນການຮ່ວມມືລະຫວ່າງ ກະຊວງການເງິນແຫ່ງ ສປປ ລາວ ແລະ ທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າແຫ່ງປະເທດໄທ ຊຶ່ງຢູ່ໃນໄລຍະພິຈາລະນາດຳເນີນການຮ່ວມມື ໃນການພັດທະນາການອອກພັນທະບັດອາຊີ ເພື່ອປະໂຫຍດໃນການພັດທະນາຕະຫລາດທຶນຂອງພູມິພາກ ແລະ ເພື່ອໃຫ້ ສປປ ລາວ ເຂົ້າເຖິງແຫລ່ງເງິນທຶນ ເພື່ອໃຊ້ໃນການພັດທະນາປະເທດ.

<u>ການຮ່ວມມືດ້ານທະນາຄານ</u>

64. ກອງປະຊຸມຮັບຊາບວ່າທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ ໄດ້ຮ່ວມມືແລະປຶກສາຫາລືຢ່າງຕໍ່ເນື່ອງ ໂດຍສະເພາະການສົ່ງເສີມການຊຳລະເງິນຜ່ານລະບົບໜັງສືສິນເຊື່ອ (L/C), ການນຳເອົາເງິນເຂົ້າ-ອອກປະເທດ, ການບໍລິການແລກປ່ຽນເງິນ, ການໂອນເງິນກີບ-ບາດ ເນື່ອງຈາກປະຈຸບັນ ການຄ້າຊາຍແດນສ່ວນໃຫຍ່ ຈະບໍ່ຜ່ານລະບົບທະນາຄານ.

65. ກອງປະຊຸມສະໜັບສະໜູນໃຫ້ທະນາຄານແຫ່ງ ສປປ ລາວ, ທະນາຄານການຄ້າຕ່າງປະເທດລາວ ແລະ ທະນາຄານແຫ່ງປະເທດໄທ, ທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າແຫ່ງປະເທດໄທ ແລະ ສາຂາທີ່ກ່ຽວຂ້ອງຂອງທັງສອງຝ່າຍ ສືບຕໍ່ປຶກສາຫາລືໃນລາຍລະອຽດ ກ່ຽວກັບການໃຫ້ບໍລິການທາງການເງິນຫລາຍຮູບແບບແກ່ຜູ້ດຳເນີນທຸລະກິດ, ພັດທະນາການຊຳລະເງິນຕາມຊາຍແດນໃຫ້ດີຂຶ້ນ ເພື່ອຮັກສາສະຖຽນລະພາບເງິນຕາຂອງແຕ່ລະປະເທດ, ລວມທັງການຈັດກອງປະຊຸມເພື່ອປຶກສາຫາລືກ່ຽວກັບການຮ່ວມມືດ້ານວິຊາການ ແລະແລກປ່ຽນບົດຮຽນລະຫວ່າງກັນ.

66. ກອງປະຊຸມຮັບຊາບ ແລະ ສະໜັບສະໜູນການຮ່ວມມືດ້ານວິຊາການ ແລະ ການແລກປ່ຽນບົດຮຽນ ລະຫວ່າງທະນາຄານແຫ່ງ ສປປ ລາວ ກັບ ຕະຫລາດຫລັກຊັບແຫ່ງປະເທດໄທ ຕາມບົນທຶກຄວາມເຂົ້າ ໃຈ ເພື່ອກຽມການຈັດຕັ້ງຕະຫລາດຫລັກຊັບໃນ ສປປ ລາວ ໃນປີ 2010.

67. ກອງປະຊຸມສະໜັບສະໜູນໃຫ້ທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານແຫ່ງປະເທດໄທ ຊຸກຍູ້ໃຫ້ສະມາຄົມທະນາຄານທຸລະກິດ ແລະ ທະນາຄານທຸລະກິດຂອງສອງປະເທດ ຮ່ວມມືດ້ານທຸລະກິດ ແລະ ແລກປ່ຽນບົດຮຽນລະຫວ່າງກັນຢ່າງຕໍ່ເນື່ອງ.

<u>ການຮ່ວມມືດ້ານເສດຖະກິດ ພາຍໃຕ້ຂອບອະນຸພາກພື້ນ</u>

68. ກອງປະຊຸມຮັບຊາບກ່ຽວກັບການດຳເນີນງານຂອງສອງຝ່າຍ ເພື່ອເຮັດໃຫ້ໂຄງການຄວາມຮ່ວມມືທະວິພາຄີ ລາວ-ໄທ ພາຍໃຕ້ຍຸດທະສາດຄວາມຮ່ວມມືທາງເສດຖະກິດ ອິຣາວະດີ-ເຈົ້າພະຍາ-ແມ່ນ້ຳຂອງ (ACMECS) ໃຫ້ເປັນຮູບປະທຳຫລາຍຂຶ້ນ. ກອງປະຊຸມສະແດງຄວາມຍິນດີຕໍ່ຜົນສຳເລັດຂອງ ກອງປະຊຸມລະດັບຜູ້ນຳຍຸດທະສາດການຮ່ວມມື ທາງດ້ານເສດຖະກິດ ອິຣາວະດີ-ເຈົ້າພະຍາ-ແມ່ນ້ຳຂອງ (ACMECS) ຄັ້ງທີ 3 ທີ່ປະເທດຫວຽດນາມ ໂດຍທັງສອງຝ່າຍເຫັນດີໃຫ້ຮ່ວມມືກັນຢ່າງໃກ້ຊິດໃນການຈັດຕັ້ງປະຕິບັດໂຄງການຮ່ວມມືສອງຝ່າຍລາວ-ໄທ ໃນ 7 ຂະແໜງການບູລິມະສິດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

69. ສຳລັບໂຄງການ Contract farming ສອງຝ່າຍ ເຫັນດີໃຫ້ເລັ່ງລັດມີການເຈລະຈາເນື້ອໃນ MOU ວ່າດ້ວຍການຮ່ວມມື ແລະ ສົ່ງເສີມໂຄງການ Contract farming ເພື່ອໃຫ້ສາມາດໄດ້ລົງນາມຮ່ວມກັນ ໃນໂອກາດການຢ້ຽມຢາມ ຣາຊະອານາ ຈັກໄທ ຢ່າງເປັນທາງການ ຂອງພະນະທ່ານປະທານປະເທດ ແຫ່ງ ສປປ ລາວ ໃນເດືອນ ພຶດສະພາ 2009 ນີ້.

70. ກອງປະຊຸມຮັບຊາບຄວາມຄືບໜ້າຂອງການຮ່ວມມື ໃນຂອບອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS) ຕາມຜົນກອງປະຊຸມລະດັບຜູ້ນຳຄັ້ງທີ 3 ໃນເດືອນ ມີນາ 2008 ທີ່ ນະຄອນຫລວງວຽງຈັນ ກ່ຽວກັບການພັດທະນາເຄືອຂ່າຍຄົມມະນາຄົມ ໃນຂອບການພັດທະນາແລວເສດຖະກິດ ເໜືອ-ໃຕ້ (North-South Economic Corridor), ໂຄງການກໍ່ສ້າງເສັ້ນທາງ R3 ເຊື່ອມຕໍ່ ລາວ-ໄທ-ຈີນ ໄດ້ສຳເລັດ ແລະຈະເລັ່ງລັດໃຫ້ການກໍ່ສ້າງຂົວຂ້າມແມ່ນ້ຳຂອງ ລະຫວ່າງ ແຂວງບໍ່ແກ້ວ-ຊຽງລາຍ ໃຫ້ມີການລົງມືກໍ່ສ້າງໃນທ້າຍປີ 2009.

## ການຮ່ວມມືດ້ານການພັດທະນາ ລາວ-ໄທ

72. ກອງປະຊຸມສະແດງຄວາມຍິນດີຕໍ່ການຮ່ວມມືໃນການພັດທະນາບຸກຄະລາກອນ, ການສຶກສາ, ກະສິກຳ, ສາທາລະນະສຸກ ແລະ ການດຳເນີນໂຄງການພັດທະນາດ້ານຕ່າງໆ ໃນຂອບການຮ່ວມມືທາງດ້ານວິຊາການ ລາວ-ໄທ ສົກປີ 2006-2008 ໄດ້ມີຄວາມຄືບໜ້າ ແລະ ບັນລຸຕາມເປົ້າໝາຍ ໂດຍໄດ້ຕອບສະໜອງຕໍ່ນະໂຍບາຍການພັດທະນາເສດຖະກິດ ແລະ ສັງຄົມ ຂອງລັດຖະບານລາວ, ຊຶ່ງໄດ້ສຳເລັດຈຳນວນ 6 ໂຄງການ ແລະ ມີໂຄງການທີ່ກຳລັງດຳເນີນຢູ່ຈຳນວນ 12 ໂຄງການ.

## ການຮ່ວມມືດ້ານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ

73. ກອງປະຊຸມເຫັນດີໃຫ້ຈັດຕັ້ງປະຕິບັດ ຕາມຜົນຂອງກອງປະຊຸມການຮ່ວມມືທາງດ້ານວິຊາການ ລາວ-ໄທ ຄັ້ງທີ 14 ໂດຍຝ່າຍໄທໃຫ້ທຶນການສຶກສາລະດັບປະລິນຍາໂທ ຈຳນວນ 30 ທຶນ, ທຶນຝຶກອົບຮົມ, ທັດສະນະສຶກສາ ໃນຂະແໜງຕ່າງໆ ຈຳນວນ 140 ທຶນ. ສຳລັບໂຄງການ ຝ່າຍໄທຈະສືບຕໍ່ໃຫ້ການສະໜັບສະໜູນ ຈຳນວນ 4 ໂຄງການ ຄື: ໂຄງການພັດທະນາໂຮງຮຽນເຕັກນິກແຂວງສະຫວັນນະເຂດ, ໂຄງການຜະລິດສື່ການຮຽນການສອນເອເລັກໂຕຣນິກ ສຳລັບໂຮງຮຽນມັດທະຍົມຕອນປາຍ, ໂຄງການຍົກລະດັບພະນັກງານຂອງມະຫາວິທະຍາໄລແຫ່ງຊາດລາວໃຫ້ເປັນລະດັບປະລິນຍາຕີ ແລະ ໂຄງການສ້າງຄວາມເຂັ້ມແຂງສາຂາວິຊາດ້ານການພັດທະນາຂອງມະຫາວິທະຍາໄລແຫ່ງຊາດລາວ.

74. ກອງປະຊຸມຮັບຊາບການດຳເນີນການຮ່ວມມືດ້ານການສຶກສາພາຍໃຕ້ບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືດ້ານການສຶກສາ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຣາຊະອານາຈັກໄທ ໃນປີ 2004 ແລະ ບັນທຶກກອງປະຊຸມການຮ່ວມມືດ້ານການສຶກສາລາວ-ໄທ ລະຫວ່າງ ກະຊວງສຶກສາທິການ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງ

ສຶກສາທິການ ແຫ່ງ ຣາຊະອານາຈັກໄທ ໃນວັນທີ 14 ສິງຫາ 2008 ທີ່ ຈັງຫວັດອຸດອນທານີ ຣາຊະອານາຈັກໄທ.

<u>ການຮ່ວມມືດ້ານກະສິກຳ</u>

75. ກອງປະຊຸມຮັບຊາບຄວາມຄືບໜ້າ ແລະການດຳເນີນໂຄງການກະສິກຳ ຈຳນວນ 5 ໂຄງການ ຄື: ໂຄງການພັດທະນາກະສິກຳເຂດນ້ຳຖ້ວມ ເມືອງນ້ຳບາກ ແຂວງຫລວງພະບາງ, ໂຄງການພັດທະນາການລ້ຽງປາໃນຊົນນະບົດຢູ່ແຂວງຈຳປາສັກ ແລະ ແຂວງເຊກອງ, ໂຄງການປ້ອງກັນພະຍາດສັດ ໃນແຂວງຈຳປາສັກ, ໂຄງການພັດທະນາກະສິກຳ ແລະປ່າໄມ້ ເຂດໄຊນທອງ ເມືອງວຽງຄຳ ແຂວງຫລວງພະບາງ ແລະ ໂຄງການສົ່ງເສີມການປູກສາລີຫວານ ແລະ ຖົ່ວດິນ ເພື່ອຜະລິດເປັນສິນຄ້າໃນແຂວງວຽງຈັນ, ຊຶ່ງຝ່າຍໄທຍິນດີໃຫ້ການສະໜັບສະໜູນບັນດາໂຄງການດັ່ງກ່າວໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍຂອງແຕ່ລະໂຄງການ.

<u>ການຮ່ວມມືດ້ານສາທາລະນະສຸກ</u>

76. ກອງປະຊຸມສະໜັບສະໜູນ ໃຫ້ມີການຮັດແໜ້ນການຮ່ວມມືລະຫວ່າງໜ່ວຍງານ ສາທາລະນະສຸກລາວ-ໄທ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຮ່ວມມືກັນເພື່ອກັນພະຍາດລະບາດ ແລະ ພະຍາດຮ້າຍແຮງຕ່າງໆໄດ້ຢ່າງໄວ ມີປະສິດທິພາບຍິ່ງຂຶ້ນ ແລະ ຮັບຊາບຄວາມຮ່ວມມືດ້ານໂຄງການຊຶ່ງສຳເລັດ 1 ໂຄງການ ແລະມີ 2 ໂຄງການກຳລັງດຳເນີນຢູ່ ຄື: ໂຄງການພັດທະນາໂຮງໝໍແຂວງບໍ່ແກ້ວ ແລະ ໂຄງການຍົກລະດັບນັກວິເຄາະການແພດຂັ້ນກາງໃຫ້ເປັນນັກວິເຄາະລະດັບປະລິນຍາຕີ. ສ່ວນໂຄງການພັດທະນາລະບົບໃຫ້ການບໍລິການສາທາລະນະສຸກໂຮງໝໍເມືອງໂພນໂຮງ ໂດຍຝ່າຍລາວກຳລັງຢູ່ໃນຂັ້ນຕອນພິຈາລະນາບົດບັນທຶກຄວາມເຂົ້າໃຈ ແລະ ຈະແຈ້ງຜົນການພິຈາລະນາໃຫ້ຝ່າຍໄທຊາບໃນເວລາອັນຄວນ ເພື່ອທີ່ຈະໄດ້ມີການລົງນາມຮ່ວມກັນຕໍ່ໄປ.

<u>ການຮ່ວມມືດ້ານທໍລະນີສາດ ແລະ ຊັບພະຍາກອນ</u>

77. ກອງປະຊຸມຮັບຊາບການຮ່ວມມືວິຊາການທາງດ້ານທໍລະນີວິທະຍາ ແລະ ຊັບພະຍາກອນທໍລະນີ ໃນໄລຍະທີ່ຜ່ານມາ ແລະສະໜັບສະໜູນໃຫ້ສືບຕໍ່ມີການຮ່ວມມືກັນຢ່າງແໜ້ນແຟ້ນຕໍ່ໄປ.

<u>ການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ</u>

78. ກອງປະຊຸມຮັບຊາບການຮ່ວມມືວິຊາການທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ໃນໄລຍະທີ່ຜ່ານມາ ແລະສະໜັບສະໜູນໃຫ້ສືບຕໍ່ມີການຮ່ວມມືກັນຢ່າງແໜ້ນແຟ້ນຕໍ່ໄປ.

## ການຮ່ວມມືດ້ານສັງຄົມ, ການທ່ອງທ່ຽວ, ກິລາ ແລະ ການແລກປ່ຽນດ້ານວັດທະນະທຳ ສະມາຄົມ ລາວ-ໄທ ເພື່ອມິດຕະພາບ ກັບ ສະມາຄົມ ໄທ-ລາວ ເພື່ອມິດຕະພາບ

79. ກອງປະຊຸມສະແດງຄວາມຍິນດີຕໍ່ຜົນການດຳເນີນກິດຈະກຳຮ່ວມກັນ ລະຫວ່າງສະມາຄົມ ລາວ-ໄທ ເພື່ອມິດຕະພາບ ກັບ ສະມາຄົມໄທ-ລາວ ເພື່ອມິດຕະພາບ ເພື່ອສົ່ງເສີມສາຍພົວພັນລາວ-ໄທ ດ້ານສິນລະປະວັດທະນະທຳ, ດ້ານການທ່ອງທ່ຽວ, ດ້ານເສດຖະກິດ ແລະ ການປະຊຸມສຳມະນາທາງດ້ານວິຊາການ ແລະ ສະໜັບສະໜູນໃຫ້ທັງສອງຝ່າຍປະຊຸມຮ່ວມກັນ ເພື່ອກຳນົດແຜນການຮ່ວມມືຂອງສະມາຄົມ ແລະເປັນກົນໄກເສີມສ້າງຄວາມເຂົ້າໃຈອັນດີລະຫວ່າງປະຊາຊົນລາວ ແລະ ໄທ.

### ການຮ່ວມມືດ້ານການທ່ອງທ່ຽວ

80. ກອງປະຊຸມຮັບຊາບດ້ວຍຄວາມຍິນດີ ທີ່ການຮ່ວມມືດ້ານການທ່ອງທ່ຽວ ລະຫວ່າງ ລາວ-ໄທ ທັງໃນຂອບທະວິພາຄີ ແລະ ພະຫຸພາຄີ ໄດ້ດຳເນີນໄປດ້ວຍດີ ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍ ພົບປະເປີກສາຫາລືກັນຢ່າງສະໝໍ່າສະເໝີ ເພື່ອສົ່ງເສີມການຮ່ວມມືໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ ໂດຍຝ່າຍໄທຍິນດີສະໜັບສະໜູນທຶນເຝິກອົບຮົມ ເພື່ອພັດທະນາບຸກຄະລາກອນດ້ານການທ່ອງທ່ຽວ ລວມທັງໂຄງການເຊື່ອມໂຍງການທ່ອງທ່ຽວລະຫວ່າງກັນ.

### ການຮ່ວມມືດ້ານກິລາ

81. ກອງປະຊຸມສະແດງຄວາມຍິນດີ ທີ່ຝ່າຍໄທໃຫ້ການສະໜັບສະໜູນແກ່ ສປປ ລາວ ເພື່ອກະກຽມເປັນເຈົ້າພາບຈັດງານມະຫາກຳຊີເກມ ຄັ້ງທີ 25 ໃນປີ 2009 ໂດຍສະເພາະການກໍ່ສ້າງສະໜາມກິລາໃນຮົ່ມ ແລະ ພັດທະນາບຸກຄະລາກອນ, ຊຶ່ງໄດ້ມີພິທີວາງສີລາລຶກການກໍ່ສ້າງອາຄານມິດຕະພາບລາວ-ໄທ ທີ່ບຶງຂະຫຍອງ ໃນວັນທີ 23 ມັງກອນ 2009 ໂດຍນາຍົກລັດຖະມົນຕີຂອງສອງປະເທດ ເປັນປະທານຮ່ວມ.

### ການແລກປ່ຽນດ້ານວັດທະນະທຳ

82. ກອງປະຊຸມຮັບຊາບການແລກປ່ຽນກິດຈະກຳການຮ່ວມກັນດ້ານວັດທະນະທຳ ທີ່ດຳເນີນມາຢ່າງຕໍ່ເນື່ອງ ແລະ ສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງຂອງທັງສອງຝ່າຍເປີກສາຫາລື ເພື່ອແລກປ່ຽນກິດຈະກຳດ້ານວັດທະນະທຳ ຕໍ່ໄປຕາມຄວາມເໝາະສົມ.

## ກຳນົດເວລາ ແລະ ສະຖານທີ່ສຳລັບກອງປະຊຸມຄະນະກຳມາທິການຮ່ວມ ວ່າດ້ວຍການຮ່ວມມືລາວ-ໄທ ຄັ້ງທີ 16

ຝ່າຍໄທຮັບເປັນເຈົ້າພາບຈັດກອງປະຊຸມ ຄະນະກຳມາທິການຮ່ວມວ່າດ້ວຍການຮ່ວມມືລາວ-ໄທ ຄັ້ງທີ 16 ຢູ່ ຣາຊະອານາຈັກໄທ, ສຳລັບກຳນົດເວລາ ແລະສະຖານທີ່ຈັດກອງປະຊຸມ ຈະໄດ້ປະສານງານ ຜ່ານຊ່ອງທາງການທູດຕໍ່ໄປ.

ທັງສອງຝ່າຍ ໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ດ້ວຍຄວາມຈິງໃຈ ແລະ ເຂົ້າອົກເຂົ້າໃຈກັນ ພາຍໃຕ້ບັນຍາກາດ ແຫ່ງໄມຕີຈິດມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ.

ຄະນະຜູ້ແທນຝ່າຍໄທ ໄດ້ສະແດງຄວາມຂອບໃຈ ຕໍ່ຄະນະຜູ້ແທນຝ່າຍລາວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ອຳນວຍຄວາມສະດວກເປັນຢ່າງດີ ໃນການຈັດກອງປະຊຸມຄັ້ງນີ້ ດ້ວຍຄວາມຮຽບຮ້ອຍທຸກປະການ.

ເຮັດທີ່ ເມືອງຫລວງພະບາງ, ແຂວງຫລວງພະບາງ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 25 ມີນາ 2009 ຄູ່ກັນເປັນສອງສະບັບຕົ້ນ ພາສາລາວ ແລະ ພາສາໄທ, ທັງສອງພາສາມີຄຸນຄ່າເທົ່າທຽມກັນ.

ຕາງໜ້າ
ລັດຖະບານ ແຫ່ງ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ

ດຣ. ທອງລຸນ ສີສຸລິດ
ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີວ່າການກະຊວງການຕ່າງປະເທດ

ຕາງໜ້າ
ລັດຖະບານ ແຫ່ງ ຣາຊະອານາຈັກໄທ

ກະສິດ ພີຣົມ
ລັດຖະມົນຕີວ່າການກະຊວງການຕ່າງປະເທດ